# ຄວາມເຫັນດີເຫັນພ້ອມຢ່າງເປັນອິດສະຫຼະ ໂດຍໄດ້ຮັບຮູ້ລ່ວງໜ້າ (FPIC) ໃນວຽກງານເຣດ+

## ປຶ້ມຄູ່ມືສຳລັບຜູ້ອຳນວຍຄວາມສະດວກຢູ່ຂັ້ນຮາກຖານ

ຄຳຖາມ ແລະ ຄຳຕອບ



THE CENTER FOR PEOPLE AND FORESTS

RECOFTC

ຄວາມເຫັນດີເຫັນພ້ອມຢ່າງເປັນອິດສະຫຼະ ໂດຍໄດ້ຮັບຮູ້ລ່ວງໜ້າ (FPIC) ໃນວຽກງານເຣດ+:
*ປຶ້ມຄູ່ມືສຳລັບຜູ້ອຳນວຍຄວາມສະດວກຢູ່ຂັ້ນຮາກຖານ*
ຄຳຖາມ ແລະ ຄຳຕອບ

ສະຫງວນລິຂະສິດ © ອົງການ RECOFTC ເດືອນມັງກອນ 2014
ບາງກອກ, ປະເທດ ໄທ

ປະກອບຮູບພາບທັງໝົດໂດຍ ອົງການ RECOFTC

ຜູ້ຖືລິຂະສິດທີ່ສະໜອງແຫຼ່ງຂໍ້ມູນຮັບຮູ້ຢ່າງເຕັມທີ່ ແລະ ອະນຸຍາດໃຫ້ພິມຄືນປຶ້ມຄູ່ມືສະບັບນີ້ ເພື່ອຈຸດມຸ້ງໝາຍທາງດ້ານການສຶກສາ ຫຼື ບໍ່ແມ່ນເພື່ອຈຸດມຸ້ງໝາຍທາງດ້ານການຄ້າ ໂດຍບໍ່ຕ້ອງຂຽນຂໍອະນຸຍາດລ່ວງໜ້າຈາກບັນດາຜູ້ຖືລິຂະສິດ. ຫ້າມພິມຄືນປຶ້ມຄູ່ມືສະບັບນີ້ ເພື່ອຂາຍ ຫຼື ຈຸດປະສົງທາງດ້ານການຄ້າອື່ນໆ ໂດຍບໍ່ໄດ້ຮັບອະນຸຍາດເປັນລາຍລັກອັກສອນຈາກຜູ້ຖືລິຂະສິດ.

ເອກະສານສະບັບນີ້ ແມ່ນຜົນຜະລິດໜຶ່ງຈາກໂຄງການທີ່ໄດ້ຮັບທຶນຊ່ວຍເຫລືອຈາກອົງການເພື່ອການຮ່ວມມືພັດທະນາຂອງປະເທດ ນອກແວ (Norad). ຢ່າງໃດກໍ່ຕາມ, ທັດສະນະຄຳຄິດ-ຄຳເຫັນ ແລະ ຂໍ້ມູນໃນເອກະສານນີ້ ສູນຝຶກອົບຮົມປ່າໄມ້ຊຸມຊົນພາກພື້ນອາຊີ-ປາຊີຟິກ (RECOFTC) - ສູນສຳລັບປະຊາຊົນ ແລະ ປ່າໄມ້ ແລະ Norad ບໍ່ຈຳເປັນຕ້ອງຮັບຜິດຊອບຕໍ່ທັດສະນະ ຫຼື ຂໍ້ມູນ ຫຼື ຄວາມເຊື່ອໝັ້ນໃດໆໃນເອກະສານສະບັບນີ້.

# ຈຸດມຸ້ງໝາຍໃນການຈັດພິມຄັ້ງນີ້

ປື້ມຫົວນີ້ໄດ້ພັດທະນາຂຶ້ນ ເພື່ອໃຫ້ການສະໜັບສະໜູນຄູຝຶກ ແລະ ຜູ້ອຳນວຍຄວາມສະດວກທີ່ມີສ່ວນພົວພັນໃນການຝຶກອົບຮົມ ແລະ ການພັດທະນາຂີດຄວາມສາມາດກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ເຣດ+ ໂດຍສະເພາະແມ່ນຜູ້ທີ່ມີຄວາມຮູ້ພື້ນຖານກ່ຽວກັບວິຊາເຫຼົ່ານີ້ມາແລ້ວ. ປື້ມນີ້ ແມ່ນໄດ້ດັດແປງຈາກສະບັບທີ່ເປັນພາສາອັງກິດ ຊຶ່ງພັດທະນາຂຶ້ນໂດຍ RECOFTC ພາຍໃຕ້ໂຄງການສ້າງຄວາມອາດສາມາດໃຫ້ແກ່ຂັ້ນຮາກຖານສຳລັບ ເຣດ+ ລວມທັງ ສ.ປ.ປ ລາວ ຊຶ່ງເປັນໜຶ່ງໃນ 5 ປະເທດເປົ້າໝາຍຂອງໂຄງການປະຈຳຂົງເຂດພາກພື້ນອາຊີ.

ປື້ມຖາມ ແລະ ຕອບເຫຼັ້ມນີ້ໄດ້ອີງໃສ່ຫຼັກການ ວ່າດ້ວຍສິດໃນການກຳນົດໂຊກຊາຕາກຳຂອງຕົນດ້ວຍຕົນເອງຂອງປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນອື່ນໆ ກ່ຽວກັບຄວາມເຫັນດີເຫັນພ້ອມຢ່າງເປັນອິດສະຫຼະໂດຍໄດ້ຮັບຮູ້ລ່ວງໜ້າ (FPIC) ຕໍ່ກັບຄວາມຄິດລິເລີ່ມ ຫຼື ໂຄງການທີ່ສະເໜີຈາກພາຍນອກ ຊຶ່ງອາດສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ຂອງເຂົາເຈົ້າ ແລະ ກີດກັ້ນການເຂົ້າເຖິງແຫຼ່ງຊັບພະຍາກອນທຳມະຊາດ, ສິດທິໃນທີ່ດິນ ແລະ ຄຸນຄ່າ/ບັນທັດຖານທາງວັດທະນະທຳ-ສັງຄົມກໍຄືຄ່ານິຍົມອື່ນໆ, ໂດຍສະເພາະ ເຣດ+. ສະນັ້ນ, 10 ຄຳຖາມ ແລະ ຄຳຕອບທີ່ສົນທະນາໃນປື້ມຫົວນີ້ ໄດ້ຖືກອອກແບບເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການທີ່ເພີ້ມຂຶ້ນ ເພື່ອປະກອບເຂົ້າໃນການຄຸ້ມກັນດ້ານສັງຄົມ ແລະ ສິ່ງແວດລ້ອມຂອງ ເຣດ+.

ຊຸດຄຳຖາມໃນປື້ມເຫຼັ້ມນີ້ ມີລັກສະນະແບບພື້ນຖານທີ່ສຸດ ແລະ ມັກຈະຖືກຖາມໂດຍສຳມະນາກອນ ໃນເວລາຝຶກອົບຮົມ ແລະ ເວລາດຳເນີນວຽກງານສ້າງຄວາມເຂັ້ມແຂງໃຫ້ຂະແໜງປ່າໄມ້ໃນລະດັບທ້ອງຖິ່ນໂດຍທົ່ວໄປ. 10 ຄຳຖາມ ແລະ ຄຳຕອບໃນປື້ມເຫຼັ້ມນີ້ຈະຊ່ວຍອະທິບາຍ:

- ແນວຄວາມຄິດພື້ນຖານ, ທີ່ມາ ແລະ ຄວາມສຳຄັນຂອງ FPIC;
- ຫຼັກການ ພື້ນຖານຂອງ FPIC;
- ສະຖານະຂອງ FPIC ໃນຂະແໜງຄຸ້ມຄອງຊັບພະຍາກອນທຳມະຊາດ ເວົ້າລວມ ແລະ ເວົ້າສະເພາະຂະແໜງປ່າໄມ້;
- ກົດໝາຍສາກົນ ແລະ ກົດໝາຍຂອງປະເທດ ຫຼື ກອບກົດໝາຍທີ່ສະໜັບສະໜູນການນຳໃຊ້ FPIC;
- ສະຖານະປະຈຸບັນໃນການຈັດຕັ້ງປະຕິບັດ ເຣດ+; ແລະ
- ສິ່ງທ້າທາຍໃນການນຳໃຊ້ FPIC ຢູ່ຂັ້ນຮາກຖານ, ບົດບາດຂອງປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນໃນຂະບວນການ

ປື້ມໄດ້ຍົກຕົວຢ່າງທີ່ກ່ຽວຂ້ອງ ເພື່ອອະທິບາຍແນວຄວາມຄິດຕ່າງໆ ໃຫ້ມີຄວາມເລິກເຊິ່ງຕື່ມ ແລະ ບັນດາຕົວຢ່າງທີ່ຍົກຂຶ້ນແມ່ນມາຈາກຂະແໜງການອື່ນ (ອຸດສາຫະກຳ) ແລະ ຂົງເຂດອື່ນ. ເນື່ອງຈາກວ່າການຈັດຕັ້ງປະຕິບັດ ເຣດ+ ແລະ ຂະບວນການຕ່າງໆ ທີ່ເຄົາລົບສິດທິຕໍ່ຫຼັກການ FPIC ຍັງມີຈຳກັດໃນຂົງເຂດພາກພື້ນອາຊີ-ປາຊີຟິກ.

# ສິບຄຳຖາມຕົ້ນຕໍ





**ຄຳຖາມທີ 1**

ຄວາມເຫັນດີເຫັນພ້ອມຢ່າງເປັນອິດສະຫຼະ ໂດຍໄດ້ຮັບຮູ້ລ່ວງໜ້າ (FPIC) ແມ່ນຫຍັງ ແລະ ເປັນຫຍັງຈຶ່ງມີຄວາມສຳຄັນ?

**ຄຳຖາມທີ 2**

ຄຳວ່າ 'ອິດສະຫຼະ' ມີຄວາມໝາຍແນວໃດ ໃນຂະບວນການ FPIC?

**ຄຳຖາມທີ 3**

ຄຳວ່າ 'ລ່ວງໜ້າ' ມີຄວາມໝາຍແນວໃດ ໃນຂະບວນການ FPIC?

**ຄຳຖາມທີ 4**

ຄຳວ່າ 'ໄດ້ຮັບຮູ້' ມີຄວາມໝາຍແນວໃດ ໃນຂະບວນການ FPIC?

**ຄຳຖາມທີ 5**

ຄຳວ່າ 'ຄວາມເຫັນດີເຫັນພ້ອມ' ໝາຍເຖິງຫຍັງ ໃນຂະບວນການ FPIC?





**ຄຳຖາມທີ 6**

ຂະແໜງຄຸ້ມຄອງ
ຊັບພະຍາກອນທຳມະຊາດ
ອື່ນ ທີ່ຈະສາມາດດຳເນີນ
FPIC ໄດ້ມີຫຍັງແດ່?

**ຄຳຖາມທີ 7**

ເປັນຫຍັງ FPIC ຈຶ່ງສຳຄັນໃນ
ຂະແໜງຄຸ້ມຄອງປ່າໄມ້
ແລະ ສະຖານະຂອງມັນ
ໃນປະຈຸບັນ ຄືແນວໃດ?

**ຄຳຖາມທີ 8**

ກົດໝາຍສາກົນ ແລະ ກົດໝາຍ
ແຫ່ງຊາດ ຫຼື ກອບກົດໝາຍທີ່
ສະໜັບສະໜູນການນຳໃຊ້
ຫຼັກການ FPIC ແລະ ສະພາບ
ປະຈຸບັນຂອງການຈັດຕັ້ງປະຕິບັດ
FPIC ໃນ ເຣດ+ ມີຫຍັງແດ່?

**ຄຳຖາມທີ 9**

ສິ່ງທ້າທາຍຕົ້ນຕໍໃນການນຳໃຊ້
FPIC ໃນພາກປະຕິບັດຕົວ
ຈິງໃນ ເຣດ+ ມີຫຍັງແດ່ ຫຼື
ສາມາດເກີດຂຶ້ນ ແລະ ອົງກອນ
ໃດຈະເປັນຜູ້ຮັບປະກັນໃຫ້
FPIC ຖືກປະຕິບັດໃນວຽກງານ
ເຣດ+ ໃນລະດັບຊາດ?

**ຄຳຖາມທີ 10**

ບົດບາດຂອງປະຊາຊົນທ້ອງຖິ່ນ
ໃນການຈັດຕັ້ງປະຕິບັດ FPIC ໃນ
ຂົງເຂດວຽກງານ ເຣດ+ ມີຫຍັງແດ່?



# ຄຳຖາມທີ 1:

## ຄວາມເຫັນດີເຫັນພ້ອມຢ່າງເປັນອິດສະຫຼະໂດຍໄດ້ຮັບຮູ້ລ່ວງໜ້າ (FPIC) ແມ່ນຫຍັງ ແລະ ເປັນຫຍັງຈຶ່ງມີຄວາມສຳຄັນ?

ຄວາມເຫັນດີເຫັນພ້ອມຢ່າງເປັນອິດສະຫຼະໂດຍໄດ້ຮັບຮູ້ລ່ວງໜ້າ (FPIC) ສາມາດສະຫຼຸບໄດ້ວ່າ ເປັນການຮັບຮູ້ສິດໃນການກຳນົດໂຊກຊາຕາກຳຂອງຕົນດ້ວຍຕົນເອງ. FPIC ກຳນົດຂັ້ນຕອນສະເພາະທີ່ແທດເໝາະກັບວັດທະນະທຳ-ສັງຄົມຂອງທ້ອງຖິ່ນ ແນໃສ່ເພື່ອຮັບປະກັນສິດທິຂອງປະຊາຊົນທ້ອງຖິ່ນ[1] ເວລາມີການວາງແຜນ ແລະ ຈັດຕັ້ງປະຕິບັດໂຄງການພັດທະນາ ຫຼື ໂຄງການກໍ່ສ້າງພື້ນຖານໂຄງລ່າງ. ຂັ້ນຕອນຂອງ FPIC ແມ່ນອີງໃສ່ສະພາບຄວາມເປັນຈິງຂອງປະຊາຊົນໃນທ້ອງຖິ່ນ ທີ່ມີສິດໃນການເຈລະຈາເງື່ອນໄຂຂອງໂຄງການພັດທະນາທີ່ສະເໜີມາ ຫຼື ໂຄງການທີ່ຈະສົ່ງຜົນກະທົບໂດຍກົງຕໍ່ວິຖີຊີວິດ ຫຼືການດຳລົງຊີວິດຂອງເຂົາເຈົ້າ ລວມທັງສິດນຳໃຊ້ທີ່ດິນ ແລະ ຊັບພະຍາກອນ[2]. ເວົ້າອີກຢ່າງໜຶ່ງແມ່ນປະຊາຊົນທ້ອງຖິ່ນສາມາດຮັບເອົາ ຫຼື ປະຕິເສດໂຄງການພັດທະນາ ຫຼື ໂຄງການກໍ່ສ້າງພື້ນຖານໂຄງລ່າງທີ່ສະເໜີມາຈາກພາຍນອກ. ເຂົາເຈົ້າສາມາດກຳນົດເງື່ອນໄຂ ແລະ ເຈລະຈາເພື່ອຮັບເອົາ ຫຼື ປະຕິເສດໂຄງການ[3] ທີ່ສະເໜີມາ. ເຖິງຢ່າງໃດກໍ່ດີ, ສ່ວນຫຼາຍ ປະຊາຊົນທ້ອງຖິ່ນບໍ່ມີສິດອຳນາດດ້ານການເມືອງ ເພື່ອສະແດງຄວາມຄິດເຫັນ ແລະ ເຮັດໃຫ້ຄຳຄິດເຫັນເຫຼົ່ານັ້ນໄດ້ຮັບການພິຈາລະນາ. ຫຼັກການ FPIC ຈຶ່ງເປີດໂອກາດ ທັງເປັນກົນໄກເພື່ອເຄົາລົບນັບຖືສິດທິອັນພື້ນຖານຂອງເຂົາເຈົ້າ ໃນການສະແດງອອກຄຳຄິດເຫັນກ່ຽວກັບໂຄງການ ຫຼື ຄວາມຄິດລິເລີ່ມທີ່ສະເໜີມາ.

ແນວຄວາມຄິດຂອງ FPIC ບໍ່ແມ່ນສິ່ງໃໝ່. ມັນມາຈາກໂຄງການພັດທະນາຂະໜາດໃຫຍ່ທີ່ມີຜົນກະທົບຢ່າງໃຫຍ່ຫຼວງຕໍ່ການນຳໃຊ້ທີ່ດິນ ແລະ ມີຄວາມສ່ຽງສູງໃນການເກີດຂໍ້ຂັດແຍ່ງ ລະຫວ່າງ ຜູ້ຈັດຕັ້ງປະຕິບັດໂຄງການ ແລະ ຊຸມຊົນທີ່ໄດ້ຮັບຜົນກະທົບ. ບັນດາໂຄງການພັດທະນາໃນຂົງເຂດອຸດສາຫະກຳຂຸດຄົ້ນເຊັ່ນ: ຂຸດຄົ້ນບໍ່ແຮ່[4], ນ້ຳມັນ ແລະ ອາຍແກ໋ດ[5] ແມ່ນບາງຕົວຢ່າງຂອງສະພາບທີ່ເກີດຂຶ້ນ.

ໃນໄລຍະຜ່ານມາ, ການຕັດສິດຂອງປະຊາຊົນທ້ອງຖິ່ນ ໂດຍບໍ່ຍອມໃຫ້ເຂົາເຈົ້າເຂົ້າຮ່ວມໃນຂະບວນການຕັດສິນໃຈທີ່ສົ່ງຜົນກະທົບຕໍ່ຊີວິດ ແລະ ຊີວິດການເປັນຢູ່ຂອງເຂົາເຈົ້າ ໂດຍສະເພາະພາກສ່ວນທີ່ກ່ຽວຂ້ອງກັບກຳມະສິດທີ່ດິນທີ່ຖືກໂຕ້ແຍ້ງ ເຮັດໃຫ້ FPIC ເປັນສິ່ງຈຳເປັນທີ່ຫຼີກລ່ຽງບໍ່ໄດ້. ຈຸດລວມທີ່ສຳຄັນຂອງ

---

1. ປະຊາຊົນທ້ອງຖິ່ນໝາຍເຖິງປະຊາຊົນຜູ້ທີ່ຢູ່ໃນ ຫຼື ອ້ອມແອ້ມເຂດປ່າໄມ້ ໂດຍອາໄສຜະລິດຕະພັນ ແລະ ຜົນປະໂຫຍດຈາກປ່າ ເພື່ອການດຳລົງຊີວິດເປັນຫຼັກ. ປະຊາຊົນທ້ອງຖິ່ນລວມມີປະຊາຊົນພື້ນເມືອງ, ກຸ່ມຊົນເຜົ່າສ່ວນນ້ອຍ, ຜູ້ອົບພະຍົບ ແລະ ຊາວກະສິກອນຂະໜາດນ້ອຍ ຢູ່ເຂດຊົນນະບົດ.
2. Edwards, K, Triraganon, R, Silori, C, & Stephenson, J 2012, *Putting Free, Prior, and Informed Consent into Practice in REDD+ Initiatives: A Training Manual*, RECOFTC, IGES and Norad, Bangkok, Thailand.
3. Ibid
4. Mahanty, S & McDermott, CL 2012, 'Free, Prior and Informed Consent in Mining and Forest Certification: Lessons for REDD+.Presented at *"Beyond Carbon", Justice and Equity in REDD+* workshop, University of Oxford. Available from: <www.eci.ox.ac.uk/redd/downloads/ppt/1-3-mcdermott.pdf>. [ 7 January 2014].
5. Voss, M, & Greenspan, E 2012, *Community Consent Index: Oil, Gas and Mining Company Public Positions on Free, Prior, and Informed Consent* , Oxfam America Research Backgrounder series, Available from: <www.oxfamamerica.org/files/community-consent-index.pdf>.[7 January 2014].

FPIC ແມ່ນກ່ຽວກັບປະຊາຊົນພື້ນເມືອງ ແຕ່ຍັງຢູ່ລະຫວ່າງການປຶກສາຫາລື ວ່າຈະເຄົາລົບນັບຖືສິດທິຂອງຊຸມຊົນອື່ນໆຄືແນວໃດ ໂດຍສະເພາະຊຸມຊົນທີ່ອາໄສທີ່ດິນ ແລະ ຊັບພະຍາກອນປ່າໄມ້ເພື່ອດຳລົງຊີວິດ, ແລະ FPIC ນັບມື້ນັບມີຄວາມສຳຄັນໃນຂະແໜງປ່າໄມ້ເຊັ່ນດຽວກັນ. ສະນັ້ນ, ສິດທິໃນ FPIC (ຕາມທິດສະດີ) ສາມາດໃຊ້ກັບທຸກໆໂຄງການທີ່ສົ່ງຜົນກະທົບຕໍ່ຊີວິດ ແລະ ການດຳລົງຊີວິດຂອງປະຊາຊົນທ້ອງຖິ່ນ. ໃນກໍລະນີບໍ່ມີການນຳໃຊ້ຫຼັກການ FPIC ທີ່ຖືກຕ້ອງຕາມກົດໝາຍ ກໍຈະພາໃຫ້ເກີດຄວາມບໍ່ພໍໃຈໂຄງການພັດທະນາ ຊຶ່ງເປັນເລື່ອງທຳມະດາ ແລະ ເປັນການຊ້ຳເຕີມ ເມື່ອໂຄງການສົ່ງຜົນກະທົບໃນທາງລົບຕໍ່ການດຳລົງຊີວິດ ແລະ ຄວາມຢູ່ດີກິນດີຂອງຊຸມຊົນທີ່ຖືກກະທົບ ຫຼື ເຮັດໃຫ້ສະພາບທາງວັດທະນະທຳ-ສັງຄົມຂອງຊຸມຊົນ ຫຼື ພື້ນທີ່ບ່ອນທີ່ສະເໜີໂຄງການເສື່ອມເສຍ. ເຄີຍມີຫຼາຍໆຕົວຢ່າງໃນທົ່ວໂລກ ກ່ຽວກັບຫຼາຍໂຄງການຖືກໂຈະ ຫຼື ຍົກເລີກ ຍ້ອນຂາດການປຶກສາຫາລືກັບພາກສ່ວນທີ່ຖືກກະທົບ ຫຼື ການອອກມາຂັດຄ້ານຂອງຊາວກະສິກອນ, ຊຸມຊົນທ້ອງຖິ່ນ ແລະ ປະຊາຊົນພື້ນເມືອງທີ່ໄດ້ຮັບຜົນກະທົບ. ຜູ້ຈັດຕັ້ງປະຕິບັດໂຄງການອາດຕ້ອງໄດ້ຮັບພາລະຄ່າໃຊ້ຈ່າຍເພີ່ມຍ້ອນໂຄງການຊັກຊ້າ. ໃນສະພາບການດັ່ງກ່າວ, ປະຊາຊົນທ້ອງຖິ່ນກໍມີການສູນເສຍຫຼາຍຢ່າງເຊັ່ນກັນ, ລວມທັງແຫຼ່ງຊັບພະຍາກອນໃນການດຳລົງຊີວິດ ແລະ ສິ່ງຈຳເປັນໃນຊີວິດປະຈຳວັນ ຕະຫຼອດຮອດສະຖານທີ່ຕ່າງໆທີ່ມີຄວາມໝາຍຄວາມສຳຄັນທາງດ້ານວັດທະນະທຳ ແລະ ສະຖານທີ່ສັກສິດ ຊຶ່ງຍາມໃດປະຊາຊົນທ້ອງຖິ່ນກໍຍັງສືບຕໍ່ໃນການຕໍ່ສູ້ເພື່ອສິດທິເຫຼົ່ານັ້ນ (ເບິ່ງກ່ອງ 1).





## ກ່ອງ 1: ຄວາມສ່ຽງຍ້ອນເພີກເສີຍຕໍ່ຄວາມເຫັນດີເຫັນພ້ອມ

**ໂຄງການເຂື່ອນໄຟຟ້າໄຊຍະບູລີ (ເທິງນໍ້າຂອງ)** : ການສະເໜີກໍ່ສ້າງໂຄງການເຂື່ອນໄຟຟ້າໄຊຍະບູລີເທິງແມ່ນໍ້າຂອງ ພາໃຫ້ເກີດການຕຳນິຕິຊົມ ແລະ ຄັດຄ້ານຈາກບັນດາອົງການຈັດຕັ້ງສັງຄົມ ແລະ ຊຸມຊົນທ້ອງຖິ່ນຢ່າງກວ້າງຂວາງ. ເລີ່ມຕົ້ນປີ 2011 ເປັນຕົ້ນມາ, ອົງການພັນທະມິດແມ່ນໍ້າ ຢູ່ກຳປເຈຍ (RCC) ນຳໂດຍສະພາອົງການທີ່ບໍ່ສັງກັດລັດຂອງກຳປູເຈຍ ໄດ້ຮຽກຮ້ອງໃຫ້ຍົກເລີກໂຄງການເຂື່ອນໄຟຟ້າໄຊຍະບູລີດັ່ງກ່າວ. RCC ມີທ່າທີດັ່ງກ່າວ ເນື່ອງຈາກວ່າຈະເກີດຜົນກະທົບໃນທາງລົບສູງຕໍ່ການດຳລົງຊີວິດຂອງຊາວກຳປູເຈຍໂດຍສະເພາະ, ແມ່ນປະຊາຊົນທີ່ອາໄສການປະມົງເທິງແມ່ນໍ້າຂອງເພື່ອລ້ຽງຊີບ. ນອກຈາກນັ້ນ, ເຂື່ອນດັ່ງກ່າວອາດຈະເຮັດໃຫ້ເນື້ອທີ່ປ່າໄມ້, ເນື້ອທີ່ຜະລິດກະສິກຳຖືກນໍ້າຖ້ວມເພີ່ມຂຶ້ນ, ສົ່ງຜົນກະທົບໃນທາງລົບຕໍ່ຜະລິດຕະພາບທາງດ້ານລະບົບນິເວດຂອງເຂດດິນທາມອີກ ແລະ ອາດກີດຂວາງການໄຫຼວຽນຂອງຕະກອນທີ່ຈຳເປັນເພື່ອຮັກສາຄວາມອຸດົມສົມບູນຂອງດິນ ຢູ່ເຂດລຸ່ມແມ່ນໍ້າ ແລະ ເພື່ອປົກປັກຮັກສາເຂດສາມຫຼ່ຽມແມ່ນໍ້າຂອງໃຫ້ມີຄວາມຍືນຍົງ. ຍິ່ງໄປກວ່ານັ້ນ, ມີການກ່າວວ່າຂັ້ນຕອນໃນການປະເມີນຜົນກະທົບດ້ານສິ່ງແວດລ້ອມ (EIA) ມີຂໍ້ບົກພ່ອງ. ບົດລາຍງານການປະເມີນຜົນກະທົບດ້ານສິ່ງແວດລ້ອມ ວ່າມີແຕ່ພິຈາລະນາຜົນກະທົບໃນເຂດເກັບກັກນໍ້າ ແລະ 10 ກິໂລແມັດລຸ່ມແມ່ນໍ້າຂອງຈາກເຂດໂຄງການເທົ່ານັ້ນ. ອີງຕາມບົດລາຍງານການປະເມີນຍຸດທະສາດສິ່ງແວດລ້ອມ (SEA) ຂອງຄະນະກຳມະການແມ່ນໍ້າຂອງ (MRC) ຄາດວ່າຈະມີການຍ້າຍຂ້າມແດນຂອງລະບົບນິເວດ ແລະ ມີຜົນກະທົບດ້ານເສດຖະກິດ-ສັງຄົມ ຢູ່ ກຳປູເຈຍ. ຍິ່ງໄປກວ່ານັ້ນ,ຍັງມີການອ້າງອີງວ່າ ຜົນໄດ້ຮັບຈາກເຂື່ອນໄຊຍະບູລີ ສຳລັບບັນດາປະເທດແມ່ນໍ້າຂອງແມ່ນບໍ່ເທົ່າທຽມກັນ. ມີການອ້າງວ່າ ສ.ປ.ປ.ລາວ ແລະ ໄທ ຈະໄດ້ຮັບຜົນປະໂຫຍດສູງສຸດຈາກການກໍ່ສ້າງເຂື່ອນດັ່ງກ່າວ ແຕ່ໃນຂະນະດຽວກັນ ຜົນປະໂຫຍດທາງດ້ານເສດຖະກິດ-ສັງຄົມ ຂອງບັນດາປະເທດລຸ່ມແມ່ນໍ້າຈະບໍ່ສົມສ່ວນ ເປັນຕົ້ນແມ່ນກຳປູເຈຍ ແລະ ຫວຽດນາມ.

ແຫຼ່ງຂໍ້ມູນ: STIMSON 2013, *NGO Forum's Campaign Against Xayabury*. Available from: <http://www.stimson.org/summaries/ngo-forums-campaign-against-xayaburi/>. [28 December 2013].



**ໂຄງການບໍ່ແຮ່ຢານາໂກຈາ (Yanacocha)**: ຂອງບໍລິສັດນີວມົງ (Newmont) ຢູ່ ປະເທດເປຣູ ແມ່ນໜຶ່ງໃນບັນດາຕົວຢ່າງທີ່ດັງດັງ ແລະ ຮູ້ກັນຢ່າງກວ້າງຂວາງວ່າແມ່ນຫຍັງສາມາດເກີດຂຶ້ນ ຖ້າບໍ່ມີການປຶກສາຫາລືກັບຊຸມຊົນທ້ອງຖິ່ນກ່ຽວກັບໂຄງການໃດໜຶ່ງ. ການປະທ້ວງຂອງຊຸມຊົນເຮັດໃຫ້ບໍລິສັດນີວມົງເສຍຫາຍ $1.69 ຕື້ໂດລາສະຫະລັດ ຍ້ອນໂຄງການຊັກຊ້າ ແລະ ບັງຄັບໃຫ້ບໍລິສັດຕົກລົງຢຸດເຊົາຈະບໍ່ພັດທະນາບໍ່ແຮ່ຄືວລິສ໌ (QuilishMine) ຊຶ່ງມີແຮ່ຄຳທີ່ມີມູນຄ່າປະມານ $2.23 ຕື້ໂດລາສະຫະລັດ ອີກຕໍ່ໄປ. ຈາກປະສົບການດັ່ງກ່າວເຮັດໃຫ້ມີການປ່ຽນແປງພາຍໃນບໍລິສັດ Newmont ເອງ ແລະ ປະຈຸບັນບໍລິສັດດັ່ງກ່າວຈຶ່ງຖືສຳຄັນໃນການເຂົ້າຮ່ວມຂະບວນການເຈລະຈາຢ່າງກວ້າງຂວາງ ຊຶ່ງບໍ່ເຄີຍມີມາກ່ອນກ່ຽວກັບໂຄງການບໍ່ແຮ່ ອາຄີເອມ (Akyem) ຢູ່ ປະເທດການາ (Ghana).

ແຫຼ່ງຂໍ້ມູນ: Anderson P 2011, *Free, Prior and Informed Consent: Principles, and Approaches for Policy and Project Development*, RECOFTC - The Center for People and Forests, Bangkok. (original source: Lehr, A & G Smith 2010, Implementing a Corporate Free, Prior and Informed Consent Policy, Foley Hoag LLB, Boston and Washington DC. Available from: <www.foleyhoag.com>. [12 November 2013].

**ໂຄງການບໍ່ຄຳ ແອສ໌ຄໍແອນ (Esquel)** : ຢູ່ ອາກຊັງຕິນ, ການສະເໜີໂຄງການຂຸດຄົ້ນບໍ່ແຮ່ແບບເປີດ,ໂຄງການບໍ່ຄຳ ແອສ໌ຄໍແອນ ຊຶ່ງຕັ້ງຢູ່ໃກ້ກັບເມືອງ ແອສ໌ຄໍແອນ. ໃນເບື້ອງຕົ້ນ, ບໍລິສັດທີ່ຈັດຕັ້ງປະຕິບັດໂຄງການປະຕິເສດບໍ່ຍອມເຈລະຈາກັບຊາວເມືອງດັ່ງກ່າວ ເພື່ອທຳຄວາມເຂົ້າໃຈເຖິງບັນຫາຄວາມເປັນຫ່ວງເປັນໄຍຂອງເຂົາເຈົ້າ ແລະ ບໍລິສັດດັ່ງກ່າວກໍບໍ່ໄດ້ແຈ້ງໃຫ້ຊາວເມືອງຊາບກ່ຽວກັບຄວາມສ່ຽງ ແລະ ຜົນປະໂຫຍດທີ່ຈະໄດ້ຮັບຈາກໂຄງການ. ມາຮອດເດືອນມີນາ 2003, ປະຊາຊົນໄດ້ມີໂອກາດລົງຄະແນນສຽງເພື່ອຈະຕົກລົງຮັບເອົາໂຄງການ. ຜົນປະກົດວ່າ ປະຊາຊົນປະຕິເສດຢ່າງຖ້ວມທົ້ນ ບໍ່ເຫັນດີຮັບເອົາໂຄງການ. ຫຼັງຈາກນັ້ນ, ໂຄງການດັ່ງກ່າວ ກໍບໍ່ສາມາດປະຕິບັດສຳເລັດຈັກເທື່ອ ສະທ້ອນໃຫ້ເຫັນວ່າ ສຽງຂອງປະຊາຊົນນັ້ນແມ່ນໄດ້ຮັບການພິຈາລະນາ.

ແຫຼ່ງຂໍ້ມູນ: World Resource Institute 2007, *Development Without Conflict: The Business Case for Community Consent*. Available from: <www.wri.org/publication/development-without-conflict>. [19 October 2013].



ເພາະສະນັ້ນ, FPIC ຈຶ່ງແມ່ນຂະບວນການທີ່ເປັນປະໂຫຍດສຳລັບທຸກໆພາກສ່ວນທີ່ມີສ່ວນຮ່ວມ ໃນຄວາມຄິດລິເລີ່ມ ຫຼື ໂຄງການທີ່ສະເໜີມາ, ໂດຍສະເພາະ ຖ້າຫຼັກການດັ່ງກ່າວຖືກປະຕິບັດກ່ອນການລົງທຶນຕົວຈິງໃນໂຄງການນັ້ນໆ (ເບິ່ງກ່ອງ 2).

ໂດຍທົ່ວໄປ, FPIC ແມ່ນຂະບວນການທີ່ຕໍ່ເນື່ອງ, ເຮັດຊ້ຳແລ້ວຊ້ຳອີກ ແລະ ມີຫຼາຍຂັ້ນຕອນ ບໍ່ແມ່ນເປັນການຕົກລົງເຫັນດີເທື່ອໜຶ່ງເທື່ອດຽວ[6]. ນັ້ນໝາຍຄວາມວ່າຜູ້ທີ່ຈັດຕັ້ງປະຕິບັດໂຄງການ ແລະ ຊຸມຊົນທ້ອງຖິ່ນຕ້ອງຕົກລົງເຫັນດີ ແລະ ເປັນເອກະພາບກັບກິດຈະກຳຕ່າງໆ ໃນແຕ່ລະໄລຍະຂອງວົງຈອນການດຳເນີນງານຂອງໂຄງການ. ຖ້າມີການຕົກລົງເຫັນດີ ໃນຂັ້ນຕອນຕົ້ນຂອງໂຄງການຈຳເປັນຕ້ອງໄດ້ຮັບການເຫັນດີເຫັນພ້ອມຂອງຊຸມຊົນທ້ອງຖິ່ນນັ້ນກ່ອນເລີ່ມລົງມືວາງແຜນ ແລະ ຈັດຕັ້ງປະຕິບັດຂັ້ນຕອນຕໍ່ໄປຂອງໂຄງການທີ່ສະເໜີມາ. ການຕົກລົງເຫັນດີໃນເບື້ອງຕົ້ນເພື່ອເລີ່ມໂຄງການ ບໍ່ໝາຍຄວາມວ່າຈະພຽງພໍເພື່ອໃຫ້ໂຄງການສາມາດເດີນໜ້າຈົນກ່ວາສຳເລັດ.

---

6. Sosa, I 2011, *License to Operate: Indigenous relations and free, prior and informed consent in the mining industry.* Available from: <http://www.sustainalytics.com/sites/default/files/indigenouspeople_fpic_final.pdf>. [19 October 2013].



## ກ່ອງ 2: ຜົນປະໂຫຍດຂອງການໄດ້ຮັບຄວາມເຫັນດີເຫັນພ້ອມ ຂອງປະຊາຊົນທ້ອງຖິ່ນສຳລັບໂຄງການພັດທະນາ

ຢູ່ ຟີລິບປິນ, ໂຄງການຂຸດຄົ້ນອາຍແກ໋ດທຳມະຊາດນອກຊາຍຝັ່ງຂອງເກາະປາລາວັນ (Palawan-Island) ໄດ້ຮັບການສະໜັບສະໜູນຢ່າງຫຼວງຫຼາຍຈາກປະຊາຊົນທ້ອງຖິ່ນ ເນື່ອງຈາກວ່າທາງໂຄງການໄດ້ແຈ້ງໃຫ້ຊຸມຊົນທີ່ຈະຖືກຜົນກະທົບຊາບເປັນຢ່າງດີ ແລະ ສະເໜີຂໍຄວາມເຫັນດີເຫັນພ້ອມຈາກເຂົາເຈົ້າ. ອີງຕາມສະຖາບັນຊັບພະຍາກອນໂລກ ພາກສ່ວນທີ່ດຳເນີນໂຄງການດັ່ງກ່າວໄດ້ຈັດກອງປະຊຸມ “(1) ເຂົ້າເຖິງຊຸມຊົນຢ່າງທົ່ວເຖິງ ແລະ ສຳພາດຜູ້ນຳທີ່ສຳຄັນຂອງຊຸມຊົນ ແລະ ຜູ້ທີ່ສາມາດຕັດສິນບັນຫາ; (2) ເຜີຍແຜ່ຂໍ້ມູນຂ່າວສານ, ການສຶກສາ ແລະ ການຕິດຕໍ່ສື່ສານ; (3) ສຳຫຼວດຄວາມເຂົ້າໃຈ ແລະ ຈັດກອງປະຊຸມປຶກສາຫາລືແບບມີສ່ວນຮ່ວມເພື່ອແນະນຳໂຄງການ ແລະ ເຮັດໃຫ້ການສຳຫຼວດຄວາມເຂົ້າໃຈໃນເບື້ອງຕົ້ນຖືກຕ້ອງຕາມກົດໝາຍ ແລະ (4) ໃຫ້ຊຸມຊົນທ້ອງຖິ່ນເຂົ້າມາມີສ່ວນຮ່ວມໃນການວາງແຜນຄຸ້ມຄອງດ້ານສິ່ງແວດລ້ອມ.”

ໂດຍອີງໃສ່ຂໍ້ສະເໜີແນະນຳຂອງຊຸມຊົນທ້ອງຖິ່ນ ຜູ້ດຳເນີນໂຄງການຈຶ່ງໄດ້ດັດປັບແຜນ ແລະ ສືບຕໍ່ປຶກສາຫາລືກັບຊຸມຊົນຕະຫຼອດໄລຍະຂອງການກໍ່ສ້າງ ເຮັດໃຫ້ຊຸມຊົນຍອມຮັບ ແລະ ການຈັດຕັ້ງປະຕິບັດໂຄງການກໍປະສົບຜົນສຳເລັດ.

ແຫຼ່ງຂໍ້ມູນ: World Resources Institute 2007, *Development Without Conflict: The Business Case for Community Consent*. Available from: <www.wri.org/publication/development-without-conflict>. [19 October 2013].

# ຄຳຖາມທີ 2:

## ຄຳວ່າ 'ອິດສະຫຼະ' ມີຄວາມໝາຍແນວໃດໃນຂະບວນການ FPIC?

'ອິດສະຫຼະ' ໃນຂະບວນການ FPIC ໝາຍເຖິງການຕັດສິນໃຈ ໂດຍຜ່ານຂະບວນການ FPIC ນັ້ນຕ້ອງເປັນອິດສະຫຼະຈາກການບັງຄັບ ເຊັ່ນ: ປາດສະຈາກຄວາມກົດດັນ, ການໃຊ້ກຳລັງ, ບິດເບືອນ ຫຼື ຂົ່ມຂູ່ຈາກພາກສ່ວນໃດໜຶ່ງ (ບຸກຄົນ, ບໍລິສັດ, ອົງການຈັດຕັ້ງ ຫຼື ລັດຖະບານ[7]). ການຕັດສິນໃຈຢ່າງເປັນອິດສະຫຼະ ບໍ່ແມ່ນອີງໃສ່ແຕ່ທາງເລືອກຂອງບຸກຄົນທີ່ກ່ຽວຂ້ອງເທົ່ານັ້ນ ແຕ່ຕ້ອງອີງໃສ່ສະພາບແວດລ້ອມອີກດ້ວຍ. ຍົກຕົວຢ່າງ: ເພື່ອອຳນວຍຄວາມສະດວກໃຫ້ການຕັດສິນໃຈຢ່າງເປັນ 'ອິດສະຫຼະ' ຢ່າງນ້ອຍຕ້ອງຮັບປະກັນໃຫ້ມີກອງປະຊຸມເພື່ອປຶກສາຫາລືກ່ອນການຕັດສິນໃຈນັ້ນໆ ແລະ ຕ້ອງຈັດໃນເວລາອັນເໝາະສົມ ເພື່ອໃຫ້ປະຊາຊົນທັງຍິງ ແລະ ຊາຍ ສາມາດເຂົ້າຮ່ວມ. ສະຖານທີ່ບ່ອນຕັດສິນໃຈຕ້ອງສະດວກ ໃຫ້ທຸກຄົນສາມາດເຂົ້າເຖິງລວມທັງແມ່ຍິງ ໂດຍບໍ່ເປັນອັນຕະລາຍ ແລະ ຮັບປະກັນໃຫ້ສາມາດເຂົ້າຮ່ວມໃນຂະບວນການຕັດສິນໃຈໃຫ້ຫຼາຍທີ່ສຸດ.

ຫຼັກການ FPIC ຕ້ອງລວມເອົາທຸກໆພາກສ່ວນທີ່ມີສ່ວນຮ່ວມ ທີ່ມີທ່າວ່າຈະຖືກກະທົບຈາກການຕັດສິນໃຈ (ເບິ່ງກ່ອງ 3). ສຳຄັນ ແມ່ນໃຫ້ຕ່າງໜ້າຂອງກຸ່ມທີ່ດ້ອຍໂອກາດພ້ອມກັບພາກສ່ວນທີ່ມີສ່ວນຮ່ວມອື່ນໆເຂົ້າຮ່ວມລວມທັງພະນັກງານສັງກັດລັດ ແລະ ອົງການຈັດຕັ້ງມະຫາຊົນປະຈຳທ້ອງຖິ່ນ. ຊາວໜຸ່ມ, ຜູ້ອາວຸໂສ, ກຸ່ມຍິງ ແລະ ຊາຍ, ຜູ້ນຳຊຸມຊົນທີ່ຮູ້ໜັງສື, ຜູ້ອື່ນໆທີ່ມີຄວາມຮູ້ຄວາມເຂົ້າໃຈຮີດຄອງປະເພນີ, ປະຊາຊົນຜູ້ທີ່ຈັບຈອງທີ່ດິນຕາມປະເພນີ ແລະ ເຈົ້າຂອງທີ່ດິນຢ່າງເປັນທາງການ ຕະຫຼອດຮອດກຸ່ມຊົນເຜົ່າ ຄວນມີໜ້າເຂົ້າຮ່ວມ[8]. ການເຂົ້າຮ່ວມຈາກຫຼາຍພາກສ່ວນດັ່ງທີ່ໄດ້ກ່າວມາ ເຮັດໃຫ້ສາມາດເກັບກຳບັນຫາຕ່າງໆ, ຄວາມຄິດເຫັນ, ຄວາມສົນໃຈ ແລະ ຂໍ້ຂ້ອງໃຈ ຈາກທຸກໆພາກສ່ວນໄດ້ຢ່າງຄົບຖ້ວນ ເຮັດໃຫ້ແຕ່ລະກຸ່ມສາມາດຕົກລົງເຫັນດີ ແລະ ເປັນເອກະພາບນຳກັນໄດ້. ມີແຕ່ການເຂົ້າຮ່ວມຂອງທຸກພາກສ່ວນທີ່ມີສ່ວນຮ່ວມ ແລະ ຄວາມມຸ້ງໝັ້ນໃນການສົນທະນາປຶກສາຫາລືເທົ່ານັ້ນ ຈຶ່ງສາມາດຮັບປະກັນໃຫ້ການຕົກລົງເຫັນດີມີຄວາມຖືກຕ້ອງຢ່າງແທ້ຈິງ.

---

7. Edwards, K, Triraganon, R, Silori, C, & Stephenson, J 2012, *Putting Free, Prior, and Informed Consent into Practice in REDD+ Initiatives: A Training Manual*, RECOFTC, IGES and Norad, Bangkok, Thailand.

8. Mahanty, S & McDermott, CL 2012, 'Free, Prior and Informed Consent in Mining and Forest Certification: Lessons for REDD+. Presented at *"Beyond Carbon", Justice and Equity in REDD+* workshop, University of Oxford. Available from: <www.eci.ox.ac.uk/redd/downloads/ppt/1-3-mcdermott.pdf>. [7 January 2014].

### ກ່ອງ 3: ພາກສ່ວນທີ່ມີສ່ວນຮ່ວມທີ່ປົກກະຕິຈະເຂົ້າຮ່ວມໃນຂະບວນການ FPIC




ແຫຼ່ງຂໍ້ມູນ: ດັດແປງຈາກ Hill, C, Lillywhite, S & Simon, M 2010, *Guide to Free, Prior and Informed Consent*, Oxfam Australia. Available from: <http://www.culturalsurvival.org/sites/default/files/guidetofreepriorinformedconsent_0.pdf>. [12 January 2014].

ການທີ່ໃຫ້ທຸກຄົນເຂົ້າຮ່ວມໂຕະເຈລະຈາແມ່ນສຳຄັນ. ແຕ່ເຖິງຢ່າງໃດກໍດີ, ຕ້ອງພິຈາລະນາດ້ວຍຄວາມລະມັດລະວັງກ່ຽວກັບສິດອຳນາດ ແລະ ອິດທິພົນທາງສັງຄົມ ຊຶ່ງສາມາດມີຜົນກະທົບ ຫຼື ອິດທິພົນຕໍ່ຜູ້ທີ່ມີສ່ວນຮ່ວມໃນລະຫວ່າງການປຶກສາຫາລື ຫຼື ການຕັດສິນບັນຫາໃດໜຶ່ງ (ເບິ່ງກ່ອງ 4). ວິທີໜຶ່ງເພື່ອຫຼຸດຜ່ອນຜົນກະທົບຈາກສິດອຳນາດ ແລະ ອິດທິພົນທາງສັງຄົມ ແມ່ນກ່ອນອື່ນໃຫ້ປຶກສາກັບແຕ່ລະກຸ່ມຕ່າງຫາກ ໂດຍແຍກກຸ່ມຍິງ, ກຸ່ມຊາຍ, ກຸ່ມຊົນເຜົ່າ ແລະ ກຸ່ມທີ່ດ້ອຍໂອກາດ ຈາກນັ້ນຈຶ່ງສະເໜີຜົນຂອງການປຶກສາຫາລືໃຫ້ທຸກຄົນຊາບກ່ອນຈະຕັດສິນໃຈໃນຂັ້ນສຸດທ້າຍ.

## ກ່ອງ 4: ຕົວຢ່າງສິດອຳນາດ ແລະ ອິດທິພົນທາງສັງຄົມໃນຂະບວນການຕັດສິນໃຈ

ສຳລັບກໍລະນີສຶກສາໂດຍ Poudyal et. al. (2013) ກ່ຽວກັບປັດໄຈທີ່ມີຜົນກະທົບຕໍ່ການຈັດຕັ້ງພາຍໃນຂອງກຸ່ມນຳໃຊ້ປ່າໄມ້ຊຸມຊົນ ຢູ່ ປະເທດເນປານ. ຜູ້ຂຽນໄດ້ນຳໃຊ້ 11 ປັດໄຈເພື່ອປະເມີນປະສິດທິພາບຂອງການຈັດຕັ້ງພາຍໃນຂອງກຸ່ມນຳໃຊ້ປ່າໄມ້ຊຸມຊົນ. ຈາກ 2 ກຸ່ມ ທີ່ຜູ້ຂຽນເຮັດການປະເມີນ ໂດຍອີງໃສ່ສິດອຳນາດ ແລະ ອິດທິພົນທາງສັງຄົມ ປັດໄຈໜຶ່ງຊຶ່ງແມ່ນຄວາມສຳພັນທາງສິດອຳນາດ ຫຼື ອຳນາດລະຫວ່າງເພດ, ການແກ້ໄຂຂໍ້ຂັດແຍ່ງ ແລະ ຄວາມເປັນທຳ ມີຜົນກະທົບທາງກົງ ແລະ ທາງອ້ອມຕໍ່ການຈັດຕັ້ງ ແລະ ການຄຸ້ມຄອງນຳໃຊ້ຊັບພະຍາກອນຂອງກຸ່ມນຳໃຊ້ປ່າໄມ້ຊຸມຊົນ. ໃນຂອບເຂດຂອງປັດໄຈທີ່ປະເມີນການຈັດຕັ້ງພາຍໃນຂອງກຸ່ມນັ້ນຜູ້ຂຽນພົບວ່າ: ຊົນຊັ້ນ, ຖານະທາງສັງຄົມ, ລະດັບການສຶກສາ, ຄວາມຜູກພັນທາງການເມືອງ ແລະ ຄວາມເປັນຜູ້ນຳທາງສັງຄົມ ເປັນພຽງບາງປັດໄຈທີ່ສາມາດເຮັດໃຫ້ການຈັດຕັ້ງຄຸ້ມຄອງຂອງກຸ່ມນຳໃຊ້ປ່າໄມ້ຊຸມຊົນ ອ່ອນແອ ຫຼື ເຂັ້ມແຂງ. ສຸດທ້າຍ, ປັດໄຈເຫຼົ່ານີ້ຈະກຳນົດຄວາມເຂັ້ມແຂງ ກ່ຽວກັບຖານະຂອງບຸກຄົນໃດໜຶ່ງໃນການຕັດສິນບັນຫາ.

ນອກນັ້ນ, ຄະນະກຳມະການບໍລິຫານ ແລະ ຄະນະອະນຸກຳມະການໃຊ້ອຳນາດຢ່າງເປັນທາງການໃນການຈັດຕັ້ງປະຕິບັດກິດຈະກຳຂອງກຸ່ມນຳໃຊ້ປ່າໄມ້ຊຸມຊົນ. ໃນຂະນະດຽວກັນ, ພັກການເມືອງເປັນພາກສ່ວນທີ່ມີອິດທິພົນ ໂດຍທາງອ້ອມຕໍ່ກຸ່ມນຳໃຊ້ປ່າໄມ້ຊຸມຊົນໃນເວລາເລືອກຕັ້ງຄະນະກຳມະການບໍລິຫານ. ຈາກການມີປະຕິກິລິຍາຊຶ່ງກັນແລະກັນລະຫວ່າງ ສະມາຊິກພາຍໃນກຸ່ມນຳໃຊ້ປ່າໄມ້ຊຸມຊົນໄດ້ຊີ້ໃຫ້ເຫັນກຸ່ມນຳໃຊ້ປ່າໄມ້ຊຸມຊົນກຸ່ມໜຶ່ງ ສະມາຊິກບໍ່ມີຂໍ້ຂັດແຍ່ງພາຍໃນກຸ່ມໃນການຈັດຕັ້ງຄຸ້ມຄອງປ່າໄມ້, ສ່ວນອີກກຸ່ມໜຶ່ງ ສະມາຊິກສ່ວນຫຼາຍຍັງເຊື່ອວ່າປ່າໄມ້ຊຸມຊົນແມ່ນຢູ່ພາຍໃຕ້ 'ການຄອບງຳ ແລະ ຄວບຄຸມ' ຂອງຄະນະກຳມະການບໍລິຫານ ຊຶ່ງມັກຈະພາໃຫ້ເກີດຂໍ້ຂັດແຍ່ງພາຍໃນກຸ່ມເອງ.

ແຫຼ່ງຂໍ້ມູນ: Poudyal, BH, Paudel, G &Luintel, H 2013, 'Enhancing REDD+ outcomes through improved governance of community forest user groups', *Journal of Forest and Livelihoods,* vol. 11, no. 2.

ເຊັ່ນດຽວກັນ, ຜູ້ພັດທະນາ ຫຼື ຜູ້ຈັດຕັ້ງປະຕິບັດໂຄງການຕ້ອງມີຂໍ້ຜູກພັນເປັນລາຍລັກອັກສອນ ເພື່ອຮັບປະກັນວ່າ ຈະບໍ່ດຳເນີນຂັ້ນຕອນໃດໆຂອງໂຄງການໂດຍບໍ່ໄດ້ຮັບອະນຸຍາດຈາກທຸກໆພາກສ່ວນທີ່ມີສ່ວນຮ່ວມຕາມທີ່ໄດ້ປຶກສາຫາລື ແລະ ຕົກລົງເປັນເອກະພາບກັນຕະຫຼອດໄລຍະຂອງໂຄງການ. ໃນກໍລະນີເຫັນດີເຫັນພ້ອມຕ້ອງສືບຕໍ່ເປີດໂອກາດໃຫ້ໄດ້ສົນທະນາເພື່ອຢືນຢັນຄືນອີກ[9].

ປະຊາຊົນທ້ອງຖິ່ນມີແນວໂນ້ມທີ່ຈະໄດ້ຮັບຜົນກະທົບຈາກໂຄງການ/ຄວາມຄິດລິເລີ່ມ, ມີສິດເລືອກເອົາທະນາຍຄວາມ, ຜູ້ໄກ່ເກ່ຍ, ທີ່ປຶກສາທາງກົດໝາຍ ຫຼື ພາກສ່ວນອື່ນໆ ຖ້າເຫັນວ່າຈຳເປັນໃນຂະບວນການຕັດສິນໃຈ. ຄ່າໃຊ້ຈ່າຍໃນການຈ້າງທີ່ປຶກສາຈາກທາງນອກນັ້ນ ຝ່າຍຜູ້ພັດທະນາ ຫຼື ຜູ້ຈັດຕັ້ງປະຕິບັດໂຄງການຕ້ອງໄດ້ຮັບຜິດຊອບ. ສຳຄັນທີ່ສຸດ, ແມ່ນເພື່ອກວດສອບ ແລະ ຢັ້ງຢືນຂັ້ນຕອນຂອງການຕົກລົງເຫັນດີ ໂດຍປາດສະຈາກອິດທິພົນທຸກກໍລະນີ.

---

9. Anderson, P 2011, *Free, Prior and Informed Consent: Principles and Approaches for Policy and Project Development*. RECOFTC and GIZ, Bangkok, Thailand.

# ຄຳຖາມທີ 3:

## ຄຳວ່າ 'ລ່ວງໜ້າ' ມີຄວາມໝາຍແນວໃດ ໃນຂະບວນການ FPIC?

ຄຳວ່າ 'ລ່ວງໜ້າ' ໃນ FPIC ໝາຍເຖິງສະພາບການ ຊຶ່ງໃນນັ້ນຕ້ອງມີການເຫັນດີເຫັນພ້ອມຢ່າງສົມເຫດສົມຜົນລ່ວງໜ້າ ກ່ອນຕົກລົງເຫັນດີກ່ຽວກັບຄວາມຄິດລິເລີ່ມ ຫຼື ການອະນຸຍາດໂຄງການ ແລະ ກ່ອນຈະຈັດສັນຊັບພະຍາກອນໃດໆໃຫ້ແກ່ໂຄງການ ເຊັ່ນ: ງົບປະມານການເງິນ, ວັດຖຸອຸປະກອນ ຫຼື ການຈັດຫາແຮງງານໃຫ້ໂຄງການ.

ນອກນັ້ນ, ຄຳວ່າ 'ລ່ວງໜ້າ' ຍັງໝາຍເຖິງ ຄວາມຈຳເປັນທີ່ຕ້ອງໄດ້ພິຈາລະນາກ່ຽວກັບກຳນົດເວລາທີ່ຕ້ອງການເພື່ອຈະຕັດສິນໃຈ. ປະຊາຊົນທ້ອງຖິ່ນຕ້ອງມີເວລາພຽງພໍ ເພື່ອພິຈາລະນາຂໍ້ມູນຂ່າວສານທີ່ໄດ້ຮັບ ແລະ ຍອມຮັບກັບຂະບວນການຕັດສິນໃຈ. ຕ້ອງໃຫ້ປະຊາຊົນທ້ອງຖິ່ນມີເວລາພຽງພໍ ເພື່ອວິເຄາະ ແລະ ຊອກຫາຂໍ້ມູນເພີ່ມເຕີມ ຊຶ່ງຂັ້ນຕອນນີ້ມີຄວາມສຳຄັນ[10] ທີ່ສຸດ ໃນຂະບວນການ FPIC. ການຕົກລົງກ່ຽວກັບໄລຍະເວລາໃນຂະບວນການຕັດສິນໃຈ ແລະ ເຫດການທີ່ສຳຄັນທີ່ເກີດຂຶ້ນ ກໍແມ່ນປັດໄຈໜຶ່ງທີ່ຈຳເປັນໃນຂັ້ນຕອນນີ້.

ສຳລັບຜູ້ພັດທະນາ ຫຼື ຜູ້ຈັດຕັ້ງປະຕິບັດໂຄງການ ກອບເວລາທີ່ຕ້ອງການແນ່ນອນເພື່ອກຽມຕົກລົງ ແມ່ນຂຶ້ນກັບລັກສະນະ ແລະ ຂະໜາດຂອງໂຄງການທີ່ສະເໜີມາ, ຜົນກະທົບທີ່ຄາດວ່າຈະມີຕໍ່ການດຳລົງຊີວິດຂອງປະຊາຊົນທ້ອງຖິ່ນ, ລະດັບຄວາມສ່ຽງ ແລະ ຂະບວນການຕັດສິນໃຈທີ່ປະຊາຊົນໄດ້ເລືອກເອົາຊຶ່ງທັງໝົດນີ້ແມ່ນປັດໄຈ[11] ທີ່ຕ້ອງໄດ້ພິຈາລະນາ.

ເຫດຜົນສຳຄັນໜຶ່ງທີ່ຕ້ອງໃຫ້ເວລາພຽງພໍແມ່ນເພື່ອຮັບປະກັນການປະກອບສ່ວນທີ່ຈຳເປັນທັງໝົດ ແລະ ຂໍ້ສະເໜີແນະນຳຕ່າງໆຈາກກອງປະຊຸມຮ່ວມກັບປະຊາຊົນທ້ອງຖິ່ນຕ້ອງເອົາເຂົ້າໃນແຜນ. ວິທີນີ້ຈະເປັນຜົນດີໃຫ້ທັງສອງຝ່າຍຄື: ຝ່າຍຈັດຕັ້ງປະຕິບັດໂຄງການ ແລະ ຊຸມຊົນທ້ອງຖິ່ນ ເປັນຕົ້ນ ແມ່ນເຮັດໃຫ້ໂອກາດຕັດສິນໃຈຂອງຊຸມຊົນຫຼາຍຂຶ້ນ ຊຶ່ງເປັນຜົນດີສຳລັບໂຄງການ ແລະ ສຳລັບຊຸມຊົນທ້ອງຖິ່ນແມ່ນເປັນໂອກາດໃຫ້ບັນຫາ, ຂໍ້ຂ້ອງໃຈ ແລະ ຄວາມເປັນຫ່ວງເປັນໄຍຂອງເຂົາເຈົ້າທີ່ຕິດພັນກັບໂຄງການທີ່ສະເໜີມາ ໄດ້ຮັບການສະໜັບສະໜູນ ແລະ ແກ້ໄຂໃນແຕ່ລະໄລຍະຂອງການວາງແຜນພັດທະນາ. ໃນບາງກໍລະນີ, ປະຊາຊົນທ້ອງຖິ່ນອາດຕົກລົງເຫັນດີພາຍໃຕ້ບາງເງື່ອນໄຂຂອງເຂົາເຈົ້າເທົ່ານັ້ນ.

---

10 Edwards, K, Triraganon, R, Silori, C, & Stephenson, J 2012, *Putting Free, Prior, and Informed Consent into Practice in REDD+ Initiatives: A Training Manual*, RECOFTC, IGES and Norad, Bangkok, Thailand.

11 Ibid



Norad

# ຄຳຖາມທີ 4:

## ຄຳວ່າ 'ໄດ້ຮັບຮູ້' ມີຄວາມໝາຍແນວໃດໃນຂະບວນການ FPIC?

ການ 'ໄດ້ຮັບຮູ້' ໃນຂະບວນການ FPIC ໝາຍເຖິງ ປະຊາຊົນທ້ອງຖິ່ນໄດ້ຮັບຂໍ້ມູນຂ່າວສານຄົບຖ້ວນ, ຖືກຕ້ອງ ແລະ ລະອຽດຈະແຈ້ງໃນພາສາທີ່ເຂົາເຈົ້າເຂົ້າໃຈ. ຂໍ້ມູນຂ່າວສານທີ່ກ່ຽວຂ້ອງດັ່ງກ່າວ ສາມາດລວມເອົາຂອບເຂດຂອງໂຄງການ, ຈຸດປະສົງຂອງໂຄງການ, ໄລຍະເວລາ, ບຸກຄະລະກອນ ແລະ ງົບປະມານການເງິນທີ່ກ່ຽວຂ້ອງກັບໂຄງການທີ່ສະເໜີມາ, ເນື້ອທີ່ດິນທີ່ຈະຖືກກະທົບ ແລະ ຂະບວນການ FPIC ທີ່ຈະປະຕິບັດຕາມ.

ທຸກໆຄົນທີ່ເຂົ້າຮ່ວມໃນຂະບວນການຕັດສິນໃຈຕ້ອງເຂົ້າໃຈຄວາມຄິດລິເລີ່ມ ຫຼື ໂຄງການທີ່ສະເໜີມາໃນຫຼາຍດ້ານ. ດີແທ້, ປະຊາຊົນທ້ອງຖິ່ນຕ້ອງເຂົ້າໃຈຜົນກະທົບທາງສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມຂອງໂຄງການຕະຫຼອດຮອດຜົນປະໂຫຍດ ແລະ ສິ່ງທ້າທາຍຕໍ່ກຸ່ມຄົນຕ່າງໆໃນຊຸມຊົນ ກ່ອນຕັດສິນໃຈ. ຜົນກະທົບຕໍ່ກຳມະສິດທີ່ດິນ, ຊັບພະຍາກອນທຳມະຊາດ ແລະ ການດຳລົງຊີວິດ, ລວມທັງມາດຕະການຜ່ອນເບົາ/ຊົດເຊີຍແມ່ນປັດໄຈທີ່ສຳຄັນທີ່ສຸດທີ່ຕ້ອງໄດ້ພິຈາລະນາໃນລະຫວ່າງຂັ້ນຕອນຂອງການແລກປ່ຽນຂໍ້ມູນຂ່າວສານ.

ນອກນັ້ນ, ຂໍ້ມູນຂ່າວສານທີ່ປະຊາຊົນທ້ອງຖິ່ນຮັບຊາບນັ້ນຕ້ອງສາມາດກວດສອບໄດ້ ໝາຍຄວາມວ່າ ຕ້ອງແມ່ນຂໍ້ມູນທີ່ເປັນກາງ, ລະອຽດຈະແຈ້ງ ແລະ ຄົບຖ້ວນ. ການແລກປ່ຽນຂໍ້ມູນຄວນໃຫ້ບຸກຄົນທີສາມຊ່ວຍອຳນວຍຄວາມສະດວກ (ກ່ອງ 5). ຜູ້ພັດທະນາ ຫຼື ຜູ້ຈັດຕັ້ງປະຕິບັດໂຄງການ ຕ້ອງເປີດເຜີຍຂໍ້ມູນຜົນປະໂຫຍດທັງໝົດຂອງເຂົາເຈົ້າແຕ່ເລີ່ມດຳເນີນໂຄງການ ແລະ ດ້ວຍວິທີທີ່ໂປ່ງໃສ ແລະ ຖ້າມີຂໍ້ມູນໃໝ່ ຕ້ອງແຈ້ງໃຫ້ປະຊາຊົນຮັບຊາບໃຫ້ທັນເວລາ ໝາຍຄວາມວ່າ ຂະບວນການແລກປ່ຽນຂໍ້ມູນຂ່າວສານຕ້ອງໄດ້ເຮັດແບບຕໍ່ເນື່ອງຊໍ້າແລ້ວຊໍ້າອີກ ເພື່ອໃຫ້ຜູ້ຈັດຕັ້ງປະຕິບັດໂຄງການ ແລະ ຊຸມຊົນທ້ອງຖິ່ນສາມາດມີໂອກາດປຶກສາຫາລື ເພື່ອເຈລະຈາ ແລະ ເຫັນດີເຫັນພ້ອມ.

ໂດຍທົ່ວໄປ, ຮຽກຮ້ອງໃຫ້ມີເວທີພົບປະແບບເຊິ່ງໜ້າໂດຍໃຊ້ພາສາທ້ອງຖິ່ນ[12] ເພື່ອແລກປ່ຽນຂໍ້ມູນຂ່າວສານ, ເພື່ອຮັບປະກັນໃຫ້ເຂົ້າໃຈຂໍ້ມູນຂ່າວສານໄດ້ດີກວ່າ ແລະ ສາມາດຊີ້ແຈງຄຳຖາມທີ່ມີຕໍ່ໂຄງການທີ່ສະເໜີມານັ້ນຢ່າງທັນການ. ຂໍ້ມູນຂ່າວສານຕ້ອງສື່ສານດ້ວຍວິທີການທີ່ເໝາະສົມທາງວັດທະນະທຳ ແລະ ຮັບປະກັນການນຳໃຊ້ເຄື່ອງມືແບບມີສ່ວນຮ່ວມ ເຊັ່ນ: ນຳໃຊ້ການຫຼິ້ນລະຄອນ ຫຼື ວິທີການໂຕ້ຕອບອື່ນໆ ເພື່ອສະໜັບສະໜູນຂະບວນການແລກປ່ຽນຂໍ້ມູນຂ່າວສານດັ່ງກ່າວ. ການໃຫ້ເວລາພຽງພໍເພື່ອສົນທະນາລະຫວ່າງຊຸມຊົນ ແລະ ຝ່າຍໂຄງການ ສາມາດຊ່ວຍຕອບຄຳຖາມ ແລະ ບັນຫາຂໍ້ຂ້ອງໃຈໄດ້ເປັນຢ່າງດີ (ເບິ່ງກ່ອງ 6).

---

[12] Hill, C, Lillywhite, S & Simon, M 2010, *Guide to Free, Prior and Informed Consent*, Oxfam Australia. Available from: <http://www.cultural survival.org/sites/default/files/guidetofreepriorinformedconsent_0.pdf>. [19 October 2013].

## ກ່ອງ 5: ບົດບາດຂອງຜູ້ອຳນວຍຄວາມສະດວກລະດັບທ້ອງຖິ່ນ – ປະສົບການຈາກ UN-REDD

ແຜນງານ UN-REDD ຂອງສະຫະປະຊາຊາດ ໄດ້ຈັດຕັ້ງປະຕິບັດຂະບວນການ FPIC ໃນຫຼາຍປີຜ່ານມາ ແລະ ໃນຂະນະດຽວກັນ ພັດທະນາຄວາມພ້ອມສຳລັບກິດຈະກຳ ເຣດ+. ຈາກປະສົບການຂອງແຜນງານ ຢູ່ອິນໂດເນເຊຍ ແລະ ຫວຽດນາມ ເຂົາເຈົ້າໄດ້ຍົກສູງບົດບາດຂອງຜູ້ອຳນວຍຄວາມສະດວກລະດັບທ້ອງຖິ່ນໃນລະຫວ່າງການດຳເນີນຂະບວນການ FPIC. ສະນັ້ນ, ບັນຫາການປະເມີນຄວາມສາມາດຂອງຜູ້ອຳນວຍຄວາມສະດວກລະດັບທ້ອງຖິ່ນ ແລະ ການພັດທະນາຂີດຄວາມສາມາດໃຫ້ເຂົາເຈົ້າຈຶ່ງມີຄວາມສຳຄັນ. ໂດຍທົ່ວໄປ, ຜູ້ອຳນວຍຄວາມສະດວກລະດັບທ້ອງຖິ່ນຈະເປັນຂົວຕໍ່ລະຫວ່າງບັນດາຜູ້ມີສ່ວນຮ່ວມ, ໜ່ວຍງານລັດຖະບານ ແລະ ຜູ້ພັດທະນາໂຄງການ. ຄວາມເຂົ້າໃຈຄົນທ້ອງຖິ່ນ ແລະ ທິດທາງນະໂຍບາຍຂອງລັດຖະບານຕະຫຼອດຮອດຄວາມຮູ້ດ້ານວິຊາການ, ຄວາມເຂົ້າໃຈໃນວັດທະນະທຳ ແມ່ນປັດໄຈສຳຄັນທີ່ສຸດ ເພື່ອໃຫ້ການຈັດຕັ້ງປະຕິບັດຂະບວນການ FPIC ປະສົບຜົນສຳເລັດ.

UN-REDD ໄດ້ຂຽນໄວ້ວ່າ: “ຜູ້ອຳນວຍຄວາມສະດວກລະດັບທ້ອງຖິ່ນເປັນແກນກາງໃນການປູກຈິດສຳນຶກ ແລະ ການປຶກສາຫາລືທີ່ມີປະສິດທິພາບ”, ຊຶ່ງເປັນປັດໄຈຕັດສິນຊີ້ຂາດໃນການໃຫ້ຄວາມຮູ້ແກ່ຊຸມຊົນທ້ອງຖິ່ນ ແລະ ປະຊາຊົນພື້ນເມືອງ. ນອກນັ້ນ, ເຂົາເຈົ້າຍັງຊ່ວຍສ້າງຄວາມໄວ້ວາງໃຈ ລະຫວ່າງທຸກພັກຝ່າຍອີກດ້ວຍ. ຂໍ້ສັງເກດເຫຼົ່ານີ້ຂອງ UN-REDD ສາມາດໃຊ້ເປັນຫຼັກຖານເພື່ອຢືນຢັນ ແລະ ສະໜັບສະໜູນ ໂດຍອີງໃສ່ປະສົບການໃນໂຄງການການສ້າງຄວາມອາດສາມາດໃຫ້ແກ່ຂັ້ນຮາກຖານ ສຳລັບ ເຣດ+ ທີ່ RECOFTC ຈັດຕັ້ງປະຕິບັດໃນ 5 ປະເທດ: ອິນໂດເນເຊຍ, ສ.ປ.ປ. ລາວ, ມຽນມາ, ເນປານ ແລະ ຫວຽດນາມ ຊຶ່ງມີໜ່ວຍງານປະກອບດ້ວຍ ຜູ້ອຳນວຍຄວາມສະດວກລະດັບທ້ອງຖິ່ນ ທີ່ໂຄງການສ້າງຂຶ້ນ ໄດ້ປະຕິບັດບົດບາດໜ້າທີ່ຢ່າງຈິງຈັງໃນການຊຸກຍູ້ສົ່ງເສີມການຝຶກອົບຮົມ ແລະ ສ້າງຈິດສຳນຶກກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ເຣດ+ ໃຫ້ບັນດາຜູ້ທີ່ມີສ່ວນຮ່ວມລະດັບຮາກຖານໃນ 5 ປະເທດເປົ້າໝາຍຂອງໂຄງການ.

ແຫຼ່ງຂໍ້ມູນ:1) UN-REDD Programme 2013, *Guidelines on Free, Prior and Informed Consent*. Available from: <www.un-redd.org/Launch_of_FPIC_Guidlines/tabid/105976/Default.aspx>. [12 November 2013]; 2) RECOFTC 2012, *Grassroots capacity building for REDD+ in Asia Pacific 2013*: *Annual Progress Report*, RECOFTC - The Center for People and Forests, Bangkok, Thailand.



## ກ່ອງ 6: ປະສົບການຈາກໂຄງການການສ້າງຄວາມອາດສາມາດ ໃຫ້ແກ່ຂັ້ນຮາກຖານ ສຳລັບ ເຣດ+ ຢູ່ ອາຊີ

ປະສົບການຈາກໂຄງການການສ້າງຄວາມອາດສາມາດໃຫ້ແກ່ຂັ້ນຮາກຖານ ສຳລັບ ເຣດ+ ຈັດຕັ້ງປະຕິບັດໂດຍ RECOFTC ຢູ່ 5 ປະເທດ: ອິນໂດເນເຊຍ, ສ.ປ.ປ.ລາວ, ມຽນມາ, ເນປານ ແລະ ຫວຽດນາມ ໄດ້ແນະນຳວ່າການປະກອບຮູບພາບ ແລະ ເຄື່ອງມືທາງວັດທະນະທຳທີ່ນຳໃຊ້ໄດ້ພິສູດໃຫ້ເຫັນເຄື່ອງມືເຫຼົ່ານັ້ນເປັນປະໂຫຍດສາມາດອະທິບາຍໄດ້ໃນຫຼາຍດ້ານຂອງໂຄງການ ລວມທັງແນວຄວາມຄິດ, ຂອບເຂດ, ບົດບາດຂອງຜູ້ມີສ່ວນຮ່ວມທີ່ແຕກຕ່າງກັນ ແລະ ຜົນກະທົບທີ່ອາດເກີດຂຶ້ນ ໂດຍສະເພາະກຸ່ມຄົນທີ່ມີພື້ນຖານການສຶກສາແຕກຕ່າງກັນ ແລະ ປາກເວົ້າຫຼາຍພາສາພື້ນເມືອງ. ໂຄງການໄດ້ນຳໃຊ້ແຜ່ນໂປດສະເຕີ້, ແຜ່ນໂຄສະນາ ແລະ ຄູ່ມືທີ່ກະທັດລັດເພື່ອອະທິບາຍແນວຄວາມຄິດກ່ຽວກັບ ເຣດ+ ແລະ ການປ່ຽນແປງດິນຟ້າອາກາດ ເປັນພາສາຂອງແຕ່ລະປະເທດປະຈຳຂົງເຂດ ແລະ ສະແດງລະຄອນຕຸກກະຕາ ຢູ່ ສ.ປ.ປ.ລາວ ແລະ ອິນໂດເນເຊຍ. ນອກນັ້ນ, ຢູ່ ເນປານ ໄດ້ດຳເນີນການຫຼິ້ນເກມ ຢູ່ ຕາມຖະໜົນ, ສະແດງລະຄອນ ແລະ ອອກຂ່າວທາງວິທະຍຸ. ສື່ທັງໝົດນີ້ ເປັນປະໂຫຍດຢ່າງຍິ່ງ ໂດຍໂຄງການ ສາມາດສື່ສານເຖິງຜູ້ທີ່ມີສ່ວນຮ່ວມຂັ້ນຮາກຖານໄດ້ກ່ວາ 35,000 ຄົນ ໃນການປູກຈິດສຳນຶກໃຫ້ເຂົາເຈົ້າກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ເຣດ+ ລະຫວ່າງປີ 2009 - 2013 ໃນບັນດາປະເທດທີ່ເປັນເປົ້າໝາຍຂອງໂຄງການ.

ແຫຼ່ງຂໍ້ມູນ: RECOFTC 2012, *Grassroots capacity building for REDD+ in Asia Pacific 2013: Annual Progress Report*, RECOFTC - The Center for People and Forests, Bangkok, Thailand.



ນອກຈາກແລກປ່ຽນຂໍ້ມູນຂ່າວສານຢ່າງຄົບຖ້ວນກ່ຽວກັບຄວາມຄິດລິເລີ່ມ/ໂຄງການທີ່ສະເໜີມາແລ້ວ ຜູ້ຈັດຕັ້ງປະຕິບັດໂຄງການ ແລະ ພາກສ່ວນອຳນວຍຄວາມສະດວກທີ່ຮັບຜິດຊອບໃນການດຳເນີນ FPIC ຕ້ອງແຈ້ງໃຫ້ປະຊາຊົນທ້ອງຖິ່ນຊາບກ່ຽວກັບຄວາມຮູ້ເບື້ອງຕົ້ນ ຫຼື ສ່ວນປະກອບຫຼັກຂອງ FPIC ດັ່ງລຸ່ມນີ້:

- FPIC ແມ່ນສິດທິຂອງປະຊາຊົນທ້ອງຖິ່ນ;
- ການເຫັນດີເຫັນພ້ອມກັບໂຄງການໃດໜຶ່ງຕ້ອງປະຕິບັດຕາມຂະບວນການທີ່ຕໍ່ເນື່ອງຊໍ້າແລ້ວຊໍ້າອີກ;
- ປະຊາຊົນທ້ອງຖິ່ນມີສິດຕັດສິນເລືອກວິທີປະຕິບັດ FPIC ທີ່ຄວນເປັນ;
- ເວລາ ແລະ ສະຖານທີ່ຮ່ວມປະຊຸມຕ້ອງຕົກລົງເຫັນດີ ແລະ ເປັນເອກະພາບກັນ ລະຫວ່າງປະຊາຊົນທ້ອງຖິ່ນ ແລະ ຜູ້ຈັດຕັ້ງປະຕິບັດໂຄງການ;
- ຂະບວນການຂອງ FPIC ແລະ ກົນໄກສູ່ຄວາມເຫັນດີເຫັນພ້ອມຕ້ອງມີຄວາມໂປ່ງໃສ;
- ກົນໄກຮອງຮັບການຮ້ອງທຸກ ຫຼື ຕອບຂໍ້ຂ້ອງໃຈແມ່ນສ່ວນໜຶ່ງທີ່ແຍກອອກບໍ່ໄດ້ຈາກ FPIC ແລະ ຕ້ອງໃຫ້ມີກົນໄກດັ່ງກ່າວກ່ອນຈະເລີ່ມປະຕິບັດຂັ້ນຕອນຂອງ FPIC;
- ປະຊາຊົນທ້ອງຖິ່ນມີສິດທີ່ຈະຮັບຄຳແນະນຳຈາກທີ່ປຶກສາທາງກົດໝາຍ, ວິຊາການ ແລະ ສັງຄົມທີ່ເປັນອິດສະຫຼະ;
- ທາງເລືອກໃຫ້ຄວາມຄິດລິເລີ່ມຫຼືໂຄງການທີ່ສະເໜີມາຕ້ອງໄດ້ປຶກສາຫາລືໄປພ້ອມໆກັບຜົນກະທົບທີ່ອາດເກີດຂຶ້ນ, ມາດຕະການຄວບຄຸມ, ນະໂຍບາຍຊົດເຊີຍ ແລະ ການຕິດຕາມກວດກາ ຕ້ອງເອົາເຂົ້າແຜນຂອງໂຄງການ.

# ຄຳຖາມທີ 5:

## ຄຳວ່າ 'ຄວາມເຫັນດີເຫັນພ້ອມ' ໝາຍເຖິງຫຍັງ ໃນຂະບວນການ FPIC?

ປະຊາຊົນທ້ອງຖິ່ນມີສິດຮັບເອົາ ຫຼື ປະຕິເສດຄວາມຄິດລິເລີ່ມ ຫຼື ໂຄງການໃດໜຶ່ງທີ່ສະເໜີມາ. ເຂົາເຈົ້າມີສິດຕົກລົງເຫັນດີສຳລັບໂຄງການທີ່ສະເໜີມາ ຫຼື ປະຕິເສດໃນບາດກ້າວໃດໜຶ່ງຂອງໂຄງການຕາມຂະບວນການຕັດສິນໃຈທີ່ເຂົາເຈົ້າໄດ້ເລືອກເອົາ. ເວົ້າອີກຢ່າງໜຶ່ງ, ແມ່ນເຂົາເຈົ້າສາມາດເຫັນດີເຫັນພ້ອມ ຫຼື ລະງັບການເຫັນດີເຫັນພ້ອມ.

ກ່ອນອື່ນໝົດ, ຕ້ອງເຂົ້າໃຈຮູບແບບ ແລະ ວິທີການເຫັນດີເຫັນພ້ອມ ຫຼື ການປະຕິເສດບໍ່ເຫັນດີເຫັນພ້ອມຂອງປະຊາຊົນທ້ອງຖິ່ນ. ປະຊາຊົນທ້ອງຖິ່ນອາດມີຂະບວນການຕັດສິນບັນຫາທີ່ເຂົາເຈົ້າໄດ້ເລືອກເອົາ ແລະ ຕ້ອງການປະຕິບັດໄປຕາມນັ້ນ, ແຕ່ຖ້າເປັນໄປບໍ່ໄດ້ ອາດສ້າງຂະບວນການອື່ນຂຶ້ນມາແທນ. ໃນທຸກກໍລະນີ, ຕ້ອງຖືເອົາຂະບວນການຕັດສິນໃຈທີ່ປະຊາຊົນທ້ອງຖິ່ນເປັນຜູ້ເລືອກ ແລະ ຕ້ອງການນັ້ນເປັນບູລິມະສິດ.

ປະຊາຊົນທ້ອງຖິ່ນທີ່ຈະຖືກກະທົບຈາກຄວາມຄິດລິເລີ່ມ ຫຼື ໂຄງການທີ່ສະເໜີມາຕ້ອງໃຫ້ມີສ່ວນຮ່ວມຢ່າງພ້ອມພຽງ ແລະ ເຕັມເມັດເຕັມໜ່ວຍ ເພື່ອເຫັນດີເຫັນພ້ອມ ແລະ ສະໜັບສະໜູນຂະບວນການຕັດສິນໃຈ. ເຖິງຢ່າງໃດກໍດີ, ຮູບແບບຂອງການເຫັນດີເຫັນພ້ອມ ແລະ ຜູ້ທີ່ເຫັນດີເຫັນພ້ອມນັ້ນ ອາດປ່ຽນແປງໄປຕາມແຕ່ລະກໍລະນີຂຶ້ນກັບໄລຍະຂອງການຈັດຕັ້ງປະຕິບັດກິດຈະກຳ ແລະ ກຸ່ມຄົນຕ່າງໆທີ່ຖືກກະທົບໃນຂັ້ນຕອນທີ່ແຕກຕ່າງກັນຂອງການຈັດຕັ້ງປະຕິບັດໂຄງການ[13]. ຮູບແບບຂອງການເຫັນດີເຫັນພ້ອມ ອາດລວມເອົາຂໍ້ຕົກລົງເປັນລາຍລັກອັກສອນ ເພື່ອໃຫ້ມີເອກະສານຢັ້ງຢືນ, ແຕ່ເນື່ອງຈາກວ່າຄວາມແຕກຕ່າງ ແລະ ຄວາມຫຼາກຫຼາຍທາງດ້ານວັດທະນະທຳຂອງຊຸມຊົນ ແລະ ໃນຫຼາຍກໍລະນີແມ່ນລະດັບການສຶກສາຕ່ຳໂດຍສະເພາະຢູ່ເຂດຊົນນະບົດ ຮູບແບບຂອງການຕົກລົງເປັນລາຍລັກອັກສອນອາດບໍ່ເໝາະສົມ. ໃນກໍລະນີດັ່ງກ່າວ, ຜູ້ຈັດຕັ້ງປະຕິບັດໂຄງການຕ້ອງເລືອກເອົາແນວທາງທີ່ຊຸມຊົນຕ້ອງການ ແລະ ຮູບແບບທີ່ຖືກຕ້ອງຢ່າງແທ້ຈິງຂອງການເຫັນດີເຫັນພ້ອມນັ້ນ. ເຊັ່ນດຽວກັນ, ການທົບທວນພາກສ່ວນ ແລະ ຂະບວນການຕັດສິນໃຈຂອງປະຊາຊົນທ້ອງຖິ່ນ ໃນແຕ່ລະໄລຍະ ອາດເຮັດໃຫ້ການມີສ່ວນຮ່ວມແລະປະສິດທິພາບຂອງຂະບວນການຕັດສິນໃຈໃນຂັ້ນຕໍ່ໄປໄດ້ຮັບການປັບປຸງດີຂຶ້ນ.

ເພື່ອໃຫ້ມີຫຼັກຖານຢັ້ງຢືນຢ່າງເປັນທາງການທີ່ສາມາດຮັບໄດ້ ກ່ຽວກັບການເຫັນດີເຫັນພ້ອມ ຫຼື ການປະຕິເສດ ເປັນການດີຖ້າມີເອກະສານຢູ່ໃນມື. ຕົວຢ່າງ: ການຕົກລົງເປັນລາຍລັກອັກສອນອາດຮັບບໍ່ໄດ້ ຫຼື ບໍ່ເຂົ້າໃຈສຳລັບທຸກໆພາກສ່ວນທີ່ມີສ່ວນຮ່ວມໃນຂະບວນການຕັດສິນໃຈອາດເຮັດເປັນຮູບແບບເອກະສານ

---

13. Anderson, P 2011, *Free, Prior and Informed Consent: Principles and Approaches for Policy and Project Development*. RECOFTC and GIZ, Bangkok, Thailand.



ໃນທາງວັດທະນະທຳອື່ນທີ່ເໝາະສົມ ເຊັ່ນ: ເຮັດເປັນວີດີໂອ ຫຼື ເອກະສານຂະບວນການຕັດສິນໃຈໂດຍສະແດງດ້ວຍຮູບພາບ.

ທຸກຝ່າຍຕ້ອງເຫັນດີເຫັນພ້ອມ ຫຼື ບໍ່ດັ່ງນັ້ນ ຕ້ອງໄດ້ສືບຕໍ່ປຶກສາຫາລື ເພື່ອຫາທາງອອກທີ່ສາມາດໃຊ້ໄດ້ສຳລັບທຸກຝ່າຍ. ຖ້າບໍ່ມີການເຫັນດີເຫັນພ້ອມ ແລະ ຖ້າເວລາ ແລະ ງົບປະມານບໍ່ພຽງພໍ ຄວາມຄິດລິເລີ່ມ ຫຼື ໂຄງການຕ້ອງປິດສາກລົງ ຫຼື ດັດປັບ, ຈາກນັ້ນ ຈຶ່ງເລີ່ມຂະບວນການ FPIC ໃນກອບເວລາທີ່ກຳນົດຄືນໃໝ່[14].

---

14. Anderson, P 2011, *Free, Prior and Informed Consent: Principles and Approaches for Policy and Project Development*. RECOFTC and GIZ, Bangkok, Thailand.


Khai thác lâm sản

# ຄຳຖາມທີ 6:

## ຂະແໜງຄຸ້ມຄອງຊັບພະຍາກອນທຳມະຊາດອື່ນທີ່ຈະສາມາດດຳເນີນ FPIC ໄດ້ ມີຫຍັງແດ່?

ອີງຕາມຄຳຕອບຂອງຄຳຖາມທີ 1, FPIC ແມ່ນເລີ່ມຈາກຂະແໜງຂຸດຄົ້ນຊັບພະຍາກອນເຊັ່ນ: ອຸດສາຫະກຳບໍ່ແຮ່, ນ້ຳມັນ ແລະ ອາຍແກ໋ດ. ຈາກປະສົບການທີ່ຖອດຖອນໄດ້ໃນຫຼາຍປີຜ່ານມາ ບາງຂະແໜງອຸດສາຫະກຳເຫຼົ່ານີ້ໄດ້ນຳໃຊ້ຫຼັກການ FPIC ຫຼື ດັດປັບໃສ່ໃນກົດລະບຽບຂອງຕົນເມື່ອເຫັນຄວາມສຳຄັນ[15] ຂອງຫຼັກການດັ່ງກ່າວ.

ສ່ວນຫຼາຍ FPIC ຈະສອດຄ່ອງກັບທຸກໆຂະແໜງການພັດທະນາທີ່ສົ່ງຜົນກະທົບຕໍ່ສິດນຳໃຊ້ທີ່ດິນຂອງປະຊາຊົນທ້ອງຖິ່ນ, ເຂດແດນ, ຊັບພະຍາກອນ, ການດຳລົງຊີວິດ ແລະ ສິ່ງອື່ນໆທີ່ມີຜົນກະທົບໃນທາງລົບຕໍ່ສິ່ງແວດລ້ອມ. ສະນັ້ນ, ຄວາມຄິດລິເລີ່ມ ຫຼື ໂຄງການຈາກພາຍນອກທີ່ພົວພັນເຖິງຊັບພະຍາກອນທຳມະຊາດຕ້ອງນຳໃຊ້ຂະບວນການ FPIC ດັ່ງກ່າວ.

ເມື່ອເປັນເຊັ່ນນັ້ນ, ທຸກໆໂຄງການພັດທະນາໃນຂະແໜງປ່າໄມ້ກໍແມ່ນຢູ່ໃນໝວດນີ້. ສ່ວນໂຄງການອື່ນໆເຊັ່ນ: ໂຄງການກໍ່ສ້າງເຂື່ອນໄຟຟ້າ ຫຼື ໂຄງການທີ່ນຳໃຊ້ຊັບພະຍາກອນນ້ຳ, ໂຄງການກໍ່ສ້າງເສັ້ນທາງ ຫຼື ລົດໄຟ, ໂຄງການສຳປະທານປູກໄມ້ອຸດສາຫະກຳ, ການຕັ້ງຟາມລ້ຽງສັດນ້ຳ ທີ່ຕັດຜ່ານເຂດທີ່ຢູ່ອາໄສ ຫຼື ເຂດທີ່ດິນທີ່ປະຊາຊົນນຳໃຊ້ ລວມທັງເຂດຜະລິດກະສິກຳ, ເຂດປູກໄມ້ໃຫ້ໝາກ ແລະ ເນື້ອທີ່ປ່າໄມ້ກໍຄວນນຳໃຊ້ຫຼັກການ FPIC ເຊັ່ນກັນ.

ຜົນກະທົບຈາກໂຄງການ ສາມາດກະທົບທາງກົງ ຫຼື ທາງອ້ອມກໍໄດ້. ຕົວຢ່າງໜຶ່ງຂອງຜົນກະທົບທາງກົງແມ່ນໂຄງການສ້າງເຂື່ອນ ເຮັດໃຫ້ບ້ານເຮືອນຂອງປະຊາຊົນທີ່ຢູ່ໃນ ຫຼື ອ້ອມແອ້ມເຂດໂຄງການຖືກນ້ຳຖ້ວມ. ສ່ວນຕົວຢ່າງຜົນກະທົບທາງອ້ອມ ແມ່ນການກໍ່ສ້າງເສັ້ນທາງຕ້ອງໄດ້ຕັດໄມ້ຢູ່ເນີນພູ ເວລາຝົນຕົກໜັກເຮັດໃຫ້ເກີດດິນເຈື່ອນສົ່ງຜົນກະທົບຕໍ່ປະຊາຊົນທີ່ຢູ່ໃນເຂດນັ້ນ.

---

15. Voss, M, & Greenspan, E 2012, *Community Consent Index: Oil, Gas and Mining Company Public Positions on Free, Prior, and Informed Consent*, Oxfam America Research Backgrounder series, Available from: <www.oxfamamerica.org/files/community-consent-index.pdf>. [7 January 2014].

# ຄຳຖາມທີ 7:

## ເປັນຫຍັງ FPIC ຈຶ່ງສຳຄັນໃນຂະແໜງຄຸ້ມຄອງປ່າໄມ້ ແລະ ສະຖານະຂອງມັນໃນປະຈຸບັນ ຄືແນວໃດ?

ການຮຽກຮ້ອງໃຫ້ປະຕິບັດຫຼັກການ FPIC ແມ່ນເພື່ອໃຫ້ໂຄງການພັດທະນາບໍ່ສົ່ງຜົນກະທົບໃນທາງລົບຕໍ່ກຸ່ມຄົນໃດໜຶ່ງ. ນອກຈາກໂຄງການພັດທະນາທົ່ວໄປທີ່ບຸກລຸກເຂົ້າໄປໃນຫຼາຍປະເພດທີ່ດິນທີ່ແຕກຕ່າງກັນແລ້ວ ຍັງມີຄວາມສົນໃຈອັນໃໝ່ ໂດຍສະເພາະຄວາມສົນໃຈກ່ຽວກັບທີ່ດິນປ່າໄມ້ກໍເພີ່ມຂຶ້ນເຊັ່ນກັນ ໂດຍສະເພາະຄວາມຕ້ອງການຂະຫຍາຍສວນປູກໃໝ່, ການຂຸດຄົ້ນໄມ້ (ບາງທີກໍແມ່ນເພື່ອປ່ຽນການນຳໃຊ້ທີ່ດິນຈາກທີ່ດິນປ່າໄມ້ມາເປັນທີ່ດິນກະສິກຳເພື່ອຜະລິດເປັນສິນຄ້າ) ແລະ ຄວາມສົນໃຈຂອງສາກົນໂດຍເລັ່ງໃສ່ການປົກປັກຮັກສາ ແລະ ອະນຸລັກປ່າໄມ້ທີ່ອຸດົມສົມບູນໃຫ້ຍືນຍົງຄົງຢູ່ຕະຫຼອດໄປ.

ໜຶ່ງໃນຄວາມຄິດລິເລີ່ມນັ້ນເອີ້ນວ່າ "ການຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າເສື່ອມໂຊມ (ເຣດ+)"[16] ໂດຍມີເປົ້າໝາຍຫຼຸດຜ່ອນການປ່ອຍທາດອາຍກາກໂບນິກ (ກາກບອນໄດອອກໄຊ) ຈາກປ່າໄມ້ດ້ວຍວິທີຄວບຄຸມການຕັດໄມ້ທຳລາຍປ່າ, ຫຼຸດຜ່ອນການເຮັດໃຫ້ປ່າເສື່ອມໂຊມ ແລະ ການຄຸ້ມຄອງປ່າໄມ້ແບບຍືນຍົງ.

ມີຫຼາຍຊຸມຊົນທ້ອງຖິ່ນ ແລະ ປະຊາຊົນພື້ນເມືອງອາໄສຊັບພະຍາກອນປ່າໄມ້ໃນການດຳລົງຊີວິດ ເຊັ່ນ: ການຫາຟືນ, ການຊອກຫາອາຫານສຳລັບມະນຸດ ແລະ ສັດ, ການລ້ຽງສັດ, ການເກັບຢາພື້ນເມືອງ ຫຼື ພິທີກຳຕ່າງໆທາງສາດສະໜາ. ສະນັ້ນ ແນວຄິດລິເລີ່ມໃດໆກໍຕາມ ທີ່ອາດມີຜົນກະທົບຕໍ່ການນຳໃຊ້ແບບພື້ນເມືອງເຫຼົ່ານີ້ ຕ້ອງໄດ້ຮັບການເຫັນດີເຫັນພ້ອມຈາກປະຊາຊົນທ້ອງຖິ່ນ. ເຊັ່ນດຽວກັນ, ສ່ວນຫຼາຍກິດຈະກຳເຫຼົ່ານີ້ແມ່ນດຳເນີນພາຍໃຕ້ກົດໝາຍ, ຕາມຮີດຄອງປະເພນີ[17]. ສາມາດເວົ້າໄດ້ວ່າ ສິດທິຕາມຫຼັກການ FPIC ຈະມີຄວາມສຳຄັນ[18] ທີ່ສຸດເມື່ອກົດໝາຍລັດ[19] ແລະ ການນຳໃຊ້ປ່າໄມ້ທີ່ມີການຄວບຄຸມມີຄວາມອ່ອນແອ. ສະນັ້ນ, ຕ້ອງຈັດຕັ້ງປະຕິບັດຫຼັກການ FPIC ເພື່ອຮັບປະກັນໃຫ້ຂະບວນການພັດທະນາມີຄວາມຍຸດຕິທຳ, ໃຫ້ທຸກໆກຸ່ມຄົນມີຜົນປະໂຫຍດຮ່ວມກັນ. ໃນຊຸມປີຜ່ານມາ, ໄດ້ມີການຮັບຮູ້ສິດຂອງປະຊາຊົນທ້ອງຖິ່ນເພີ່ມຂຶ້ນ ແລະ ໂດຍສະເພາະປະຊາຊົນພື້ນເມືອງໃນການກຳນົດໂຊກຊາຕາກຳຂອງຕົນດ້ວຍຕົນເອງ[20]. ຍ້ອນ ເຣດ+ ການຮັບຮູ້ສິດຂອງບັນພະບູລຸດ ຫຼື ການນຳໃຊ້ທີ່ດິນຕາມປະເພນີໄດ້ມີຄວາມເຂັ້ມແຂງຂຶ້ນໃນຂະແໜງປ່າໄມ້, ຕົວຢ່າງ: ການປະຕິບັດຄູ່ມືແນະນຳຂອງແຜນງານ UN-REDD ກ່ຽວກັບ FPIC. ປະຈຸບັນ, FPIC ກຳລັງຖືກຈັດຕັ້ງປະຕິບັດ ໂດຍຜູກພັນກັບຄວາມຄິດລິເລີ່ມຂອງ ເຣດ+, ໂຄງການປູກໄມ້ອຸດສາຫະກຳ ແລະ ໂຄງການພັດທະນາອື່ນໆໃນຂະແໜງປ່າໄມ້[21].

---

16. ເບິ່ງແຜ່ນພັບໂຄສະນາທີ່ໃສ່ຊື່ວ່າ: *ການປ່ຽນແປງດິນຟ້າອາກາດ, ປ່າໄມ້ ແລະ ທ່ານ ເພື່ອອະທິບາຍກ່ຽວກັບເຣດ+,* ຈັດພິມໂດຍ RECOFTC ພາຍໃຕ້ໂຄງການສ້າງຄວາມອາດສາມາດໃຫ້ແກ່ຂັ້ນຮາກຖານ ສຳລັບ ເຣດ+. Available from: <http://www.recoftc.org/site/uploads/content/pdf/REDDGrassroots-Q&A_eng_FINAL_226.pdf>
17. ກົດໝາຍຕາມຮີດຄອງປະເພນີ ແມ່ນກົດໝາຍຕາມປະເພນີດັ້ງເດີມ ຫຼື ວິທີປະຕິບັດທີ່ໄດ້ກາຍເປັນສ່ວນສຳຄັນທີ່ບໍ່ສາມາດແຍກອອກຈາກຂະບວນການທີ່ສາມາດຮັບໄດ້ ແລະ ເປັນຄວາມຄາດຫວັງຂອງຊຸມຊົນ, ສາຂາອາຊີບ ຫຼື ທຸລະກິດໃດໜຶ່ງ.
18. Colchester, M 2010, *Free, Prior and Informed Consent - Making FPIC work for forests and peoples,* The Forest Dialogue. Available from: <http://tfd.yale.edu/sites/default/files/tfd_fpic_researchpaper_colchester_lo-res.pdf>. [19 December 2013].
19. ກົດໝາຍ ຫຼື ບັນດານິຕິກຳທີ່ປະກາດໃຊ້ຢ່າງເປັນທາງການໂດຍອີງການນິຕິບັນຍັດ ຫຼື ອົງການປົກຄອງຂອງລັດອື່ນໆ
20. Anderson, P. (2011). *Free, Prior and Informed Consent: Principles and Approaches for Policy and Project Development.* RECOFTC and GIZ. Bangkok.
21. Colchester, M & Ferrari, MF 2007, *Making FPIC - Free, Prior and Informed Consent - Work: Challenges and Prospects for Indigenous People,* FPIC Working Paper, Forest Peoples Programme. Available from: <http://www.forestpeoples.org/sites/fpp/



# ຄຳຖາມທີ 8:

## ກົດໝາຍສາກົນ ແລະ ກົດໝາຍແຫ່ງຊາດ ຫຼື ກອບກົດໝາຍທີ່ສະໜັບສະໜູນການນຳໃຊ້ຫຼັກການ FPIC ແລະ ສະພາບປະຈຸບັນຂອງການຈັດຕັ້ງປະຕິບັດ FPIC ໃນ ເຣດ+ ມີຫຍັງແດ່?

ການກຳນົດຮູບຮ່າງລັກສະນະທີ່ຄົບຖ້ວນທີ່ສຸດສຳລັບ FPIC ແມ່ນມາຈາກຖະແຫຼງການວ່າດ້ວຍສິດທິຂອງປະຊາຊົນພື້ນເມືອງແຫ່ງສະຫະປະຊາຊາດ (UNDRIP) (ເບິ່ງກ່ອງ 7)[22]. ຈາກການຈັດຕັ້ງປະຕິບັດໂຄງການສ້າງຄວາມອາດສາມາດໃຫ້ແກ່ຂັ້ນຮາກຖານ ສຳລັບ ເຣດ+[23] ໃນ 5 ປະເທດເປົ້າໝາຍ: ອິນໂດເນເຊຍ, ສ.ປ.ປ.ລາວ, ມຽນມາ, ເນປານ ແລະ ຫວຽດນາມ ຊຶ່ງປະເທດທັງໝົດ ຍົກເວັ້ນ ສ.ປ.ປ.ລາວ ໄດ້ລົງນາມໃນຖະແຫຼງການດັ່ງກ່າວ. ເຖິງແມ່ນວ່າ UNDRIP ໄດ້ລົງນາມໂດຍ 147 ປະເທດໃນທົ່ວໂລກໃນປີ 2007 ກໍຕາມ, ແຕ່ຍັງບໍ່ທັນຮັດກຸມ ແລະ ມີຜົນບັງຄັບທາງກົດໝາຍສຳລັບປະເທດທີ່ໄດ້ລົງນາມເຫຼົ່ານີ້. ການກຳນົດເນື້ອໃນ ແລະ ຂໍ້ຄວາມໃນ UNDRIP ແມ່ນເລັ່ງໃສ່ສິດທິຕາມຫຼັກການ FPIC ສຳລັບປະຊາຊົນພື້ນເມືອງເທົ່ານັ້ນ. ແຕ່ນອກຈາກນີ້ FPIC ຍັງໃຫ້ການແນະນຳທີ່ດີສຳລັບຊຸມຊົນທ້ອງຖິ່ນອື່ນໆອີກ ເນື່ອງຈາກວ່າຍັງມີບາງຊຸມຊົນທ້ອງຖິ່ນຍັງປະຕິບັດກົດໝາຍຕາມຮີດຄອງປະເພນີ ແລະ ອາໄສຊັບພະຍາກອນທຳມະຊາດ, ຄວາມເຊື່ອຖື ແລະ ວັດທະນະທຳ[24] ໃນການດຳລົງຊີວິດຂອງເຂົາເຈົ້າ.

ອີກຖະແຫຼງການໜຶ່ງຂອງສະຫະປະຊາຊາດກ່ຽວກັບ: 'ສິດທິໃນການພັດທະນາ' ໄດ້ກຳນົດໃຫ້ "ທຸກຄົນມີສິດໃນການພັດທະນາ"[25]. ເພື່ອເຮັດໃຫ້ການພັດທະນາມີຄວາມໝັ້ນຄົງຍືນນານ ແລະ ທຸກຄົນໄດ້ຮັບຜົນປະໂຫຍດ ປະຊາຊົນຜູ້ທີ່ຖືກກະທົບຕ້ອງມີຄວາມສາມາດໃນການຄວບຄຸມເປົ້າໝາຍການພັດທະນາຂອງເຂົາເຈົ້າເອງ ການມີສ່ວນຮ່ວມຂອງຊຸມຊົນໃນໂຄງການທີ່ມີຜົນກະທົບຕໍ່ເຂົາເຈົ້າຕ້ອງຖືກຕ້ອງ ແລະ ສອດຄ່ອງກັບຂະບວນການ FPIC[26]. ຖະແຫຼງການນີ້ມີຜົນສັກສິດປະຕິບັດໄດ້ແຕ່ວັນທີ 4 ທັນວາ 1986 ໃນເວທີກອງປະຊຸມຄັ້ງທີ 97.

ນອກນັ້ນ, ຍັງມີຫຼາຍສົນທິສັນຍາສາກົນ ແລະ ມາດຖານເງື່ອນໄຂທີ່ມີເນື້ອໃນ ແລະ ຂໍ້ຄວາມຂອງ FPIC ບັນຈຸຢູ່ໃນເອກະສານເຫຼົ່ານັ້ນ ແລະ ຫຼາຍປະເທດໃນທົ່ວໂລກກໍໄດ້ລົງນາມເປັນລັດພາຄີ. ຕົວຢ່າງ: ມາດຕາ 6 ຂອງ ສົນທິສັນຍາວ່າດ້ວຍປະຊາຊົນພື້ນເມືອງ ແລະ ຊົນເຜົ່າໃນບັນດາປະເທດທີ່ເປັນເອກະລາດ (ອົງການແຮງງານລະຫວ່າງປະເທດ (ILO ເລກທີ່. 169) (1989) ໄດ້ກຳນົດຈະແຈ້ງວ່າຕ້ອງໄດ້ປຶກສາຫາລືກັບປະຊາຊົນພື້ນເມືອງ

---

22. Edwards, K, Triraganon, R, Silori, C, & Stephenson, J 2012, *Putting Free, Prior, and Informed Consent into Practice in REDD+ Initiatives: A Training Manual,* RECOFTC, IGES and Norad, Bangkok, Thailand.
23. ໂຄງການສ້າງຄວາມອາດສາມາດໃຫ້ແກ່ຂັ້ນຮາກຖານ ສຳລັບ ເຣດ+ ຈັດຕັ້ງປະຕິບັດໂດຍ RECOFTC ໂດຍການສະໜັບສະໜູນຈາກອົງການນອກແວ ເພື່ອການຮ່ວມມືດ້ານການພັດທະນາ (Norad) ແຕ່ປີ 2009 ເປັນຕົ້ນມາ. ຈຸດສຸມຂອງໂຄງການແມ່ນເພື່ອສ້າງຄວາມເຂັ້ມແຂງໃຫ້ຜູ້ມີສ່ວນຮ່ວມໃນຂັ້ນຮາກຖານສຳລັບ ເຣດ+ ລວມທັງຊຸມຊົນທ້ອງຖິ່ນທີ່ອາໄສທີ່ດິນປ່າໄມ້ເພື່ອດຳລົງຊີວິດ, ພະນັກງານລັດປະຈຳທ້ອງຖິ່ນ, ອົງການທີ່ບໍ່ສັງກັດລັດຖະບານ, ອົງການຈັດຕັ້ງທາງສັງຄົມ, ສື່ທ້ອງຖິ່ນ, ອົງການຊາວໜຸ່ມ ແລະ ອົງການຈັດຕັ້ງມະຫາຊົນຂອງທ້ອງຖິ່ນ ເພື່ອໃຫ້ເຂົາເຈົ້າ ຢູ່ໃນຖານະພ້ອມປະກອບສ່ວນຢ່າງແຂງຂັນໃນໂຄງການ ເຣດ+ ໃນອະນາຄົດ ແລະ ນຳຜົນປະໂຫຍດມາສູ່ເຂົາເຈົ້າ.
24. Conservation International 2013, *Free, Prior, Informed Consent in Context.* Available from: <www.conservation.org/about/centers_Programmes/itpp/pages/free-prior-informed-consent-case-studies.aspx>. [12 December 2013].
25. United Nations 1986, *Declaration on Right to Development.* Available from: <http://www.un.org/documents/ga/res/41/a41r128.htm>. [12 November 2013].
26. Edwards, K, Triraganon, R, Silori, C, & Stephenson, J 2012, *Putting Free, Prior, and Informed Consent into Practice in REDD+ Initiatives: A Training Manual*, RECOFTC, IGES and Norad, Bangkok, Thailand.

“ບໍ່ວ່າເວລາໃດທີ່ມີການພິຈາລະນາໂດຍນຳໃຊ້ມາດຕະການທາງກົດໝາຍ ແລະ ການບໍລິຫານທີ່ອາດມີຜົນກະທົບໂດຍກົງຕໍ່ເຂົາເຈົ້າ” ແລະ ການປຶກສາຫາລືນັ້ນ “ຕ້ອງດຳເນີນດ້ວຍຄວາມຈິງໃຈ, ມີຄວາມເຊື່ອຖື ແລະ ໃນຮູບແບບທີ່ເໝາະສົມກັບສະຖານະການ ແນໃສ່ເພື່ອບັນລຸເປົ້າໝາຍໃນການເຫັນດີເຫັນພ້ອມຕໍ່ມາດຕະການທີ່ສະເໜີມາ[27]”.

ສົນທິສັນຍາວ່າດ້ວຍຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ (1992) ກໍໄດ້ຢືນຢັນ ແລະ ຮັບຮອງຫຼັກການ FPIC ຢ່າງລະອຽດຈະແຈ້ງ. ມາດຕາ 8 (j) ກຳນົດວ່າການເຂົ້າເຖິງຄວາມຮູ້ພື້ນເມືອງ, ການປ່ຽນແປງໃໝ່ ແລະ ວິທີປະຕິບັດຂອງປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນຕ້ອງໄດ້ຮັບຄວາມເຫັນດີເຫັນພ້ອມຢ່າງເປັນອິດສະຫຼະໂດຍໄດ້ຮັບຮູ້ລ່ວງໜ້າ ຈາກຜູ້ທີ່ຄອບຄອງຄວາມຮູ້ພື້ນເມືອງ, ການປ່ຽນແປງໃໝ່ ແລະ ວິທີປະຕິບັດເຫຼົ່ານັ້ນ.

ໃນວຽກງານ ເຣດ+, ໃນຫຼາຍກອງປະຊຸມລັດພາຄີ (COP) ຂອງກອບອະນຸສັນຍາວ່າດ້ວຍການປ່ຽນແປງດິນຟ້າອາກາດຂອງສະຫະປະຊາຊາດ (UNFCCC) ຜ່ານມາໄດ້ໃຫ້ຄວາມສຳຄັນຕໍ່ FPIC. ໂດຍສະເພາະກອງປະຊຸມ COP ໃນທ້າຍປີ 2010 ໄດ້ເນັ້ນໜັກໃສ່ຄວາມຕ້ອງການທາງດ້ານສັງຄົມ ແລະ ສິ່ງແວດລ້ອມເພີ່ມໃສ່ ເຣດ+ ໂດຍອີງໃສ່ຖະແຫຼງການ UNDRIP. ຫວ່າງບໍ່ດົນມານີ້, ແຜນງານ UN-REDD ໄດ້ພັດທະນາ “ຄູ່ມືແນະນຳຄວາມເຫັນດີເຫັນພ້ອມຢ່າງເປັນອິດສະຫຼະໂດຍໄດ້ຮັບຮູ້ລ່ວງໜ້າ”[28] ເພື່ອດຳເນີນຂະບວນການປຶກສາຫາລືຜູ້ທີ່ມີສ່ວນກ່ຽວຂ້ອງກັບຜູ້ມີສິດທີ່ກ່ຽວຂ້ອງໃຫ້ເກີດເປັນຜົນຢ່າງແທ້ຈິງ ແລະ ສອດຄ່ອງກັບບົດບາດໜ້າທີ່ພາຍໃຕ້ກົດໝາຍສາກົນເພື່ອໃຫ້ໄດ້ການເຫັນດີເຫັນພ້ອມໃນປະເທດຄູ່ຮ່ວມພັດທະນາຕາມຄວາມເໝາະສົມ.

ເຖິງຢ່າງໃດກໍດີ, ເນື່ອງຈາກວ່າ ເຣດ+ ຍັງຢູ່ໃນຂັ້ນຕອນຂອງການພັດທະນາທີ່ຍັງບໍ່ທັນສຸກງອມ ການປຶກສາຫາລືທີ່ກ່ຽວຂ້ອງກັບ FPIC ໃນ ເຣດ+ ຫາກໍເລີ່ມບໍ່ເທົ່າໃດປີຜ່ານມາຢູ່ພື້ນທີ່ເປົ້າໝາຍຂອງໂຄງການທົດລອງ ແລະ ບາງໂຄງການ ເຣດ+ ທີ່ຈັດຕັ້ງປະຕິບັດຢ່າງເຕັມຮູບແບບ. ໃນກໍລະນີໃດກໍຕາມ “ບໍ່ໃຫ້ເກີດຄວາມເສຍຫາຍ” ຈາກ ເຣດ+ ຕໍ່ກັບ ປະຊາຊົນທ້ອງຖິ່ນ ຊຶ່ງເປັນສູນກາງຂອງຄວາມຄິດລິເລີ່ມໃນປະຈຸບັນກ່ຽວກັບ FPIC ໃນ ເຣດ+.

---

27. International Labour Organization 1989, *Indigenous and Tribal Peoples Convention - C169* , (No. 169). Available from: <http://www.ilo.org/dyn/normlex/en/f?p=NORMLEXPUB:12100:0::NO::P12100_ILO_CODE:C169#A6>.[7 January 2014].

28. UN-REDD Programme 2013, *Guidelines on Free, Prior and Informed Consent*. Available from: <www.un-redd.org/Launch_of_FPIC_Guidlines/tabid/105976/Default.aspx> . [12 November 2013].



## ກ່ອງ 7: ສິດທິໃນຂະບວນການ FPIC

ຖະແຫຼງການວ່າດ້ວຍສິດທິຂອງປະຊາຊົນພື້ນເມືອງແຫ່ງສະຫະປະຊາຊາດ (UNDRIP) ກຳນົດໃນມາດຕາ 32 (2) ວ່າ: "ລັດ" (ຫຼື ປະເທດ) ຕ່າງໆຕ້ອງໄດ້ປຶກສາຫາລື ແລະ ຮ່ວມມືແບບຈິງໃຈກັບປະຊາຊົນພື້ນເມືອງທີ່ກ່ຽວຂ້ອງ ໂດຍຜ່ານອົງການຈັດຕັ້ງທີ່ເປັນຕົວແທນຂອງຕົນ ເພື່ອໃຫ້ໄດ້ຄວາມເຫັນດີເຫັນພ້ອມຢ່າງເປັນອິດສະຫຼະໂດຍໄດ້ຮັບຮູ້ລ່ວງໜ້າ ກ່ອນຕົກລົງເຫັນດີຮັບເອົາໂຄງການໃດໜຶ່ງທີ່ມີຜົນກະທົບຕໍ່ທີ່ດິນ ຫຼື ອານາເຂດຂອງເຂົາເຈົ້າ"

ແຫຼ່ງຂໍ້ມູນ: United Nations 2008, *United Nations Declaration on the Rights of Indigenous Peoples*, 2007. Available from: <www.un.org/esa/socdev/unpfii/documents/DRIPS_en.pdf >. [January 7, 2014].

ສົນທິສັນຍາຂອງອົງການແຮງງານ ລະຫວ່າງປະເທດ ສະບັບເລກທີ 169 ລະບຸໃນມາດຕາ 7.1 ວ່າ "ປະຊາຊົນທີ່ກ່ຽວຂ້ອງມີສິດຕັດສິນກ່ຽວກັບຄວາມຕ້ອງການທີ່ເປັນບູລິມະສິດຂອງເຂົາເຈົ້າ ໃນຂະບວນການພັດທະນາ ເນື່ອງຈາກວ່າມັນກະທົບຕໍ່ຊີວິດ, ຄວາມເຊື່ອຖື, ສະຖາບັນ ແລະ ຄວາມຜາສຸກທາງຈິດໃຈ (...)" ແລະ "ເພື່ອນຳໃຊ້ສິດທິໃນການພັດທະນາເສດຖະກິດ ແລະ ວັດທະນະທຳ-ສັງຄົມຂອງເຂົາເຈົ້າເທົ່າທີ່ເຮັດໄດ້". ມາດຕາ 16 ກຳນົດວ່າ "ການຍົກຍ້າຍຫາທີ່ໃໝ່ສາມາດເຮັດໄດ້ ເວັ້ນແຕ່ວ່າເຂົາເຈົ້າເຫັນດີເຫັນພ້ອມ ແລະ ໄດ້ຮັບຊາບຂໍ້ມູນຂ່າວສານລ່ວງໜ້າເທົ່ານັ້ນ"

ແຫຼ່ງຂໍ້ມູນ: International Labour Organization 1989, *Indigenous and Tribal Peoples Convention - C169 , (No. 169).* Available from: <http://www.ilo.org/dyn/normlex/en/f?p=NORMLEXPUB:12100:0::NO::P12100_ILO_CODE:C169#A6 >. [7 January 2014].

ໃນລະດັບຊາດ, ບາງປະເທດໄດ້ຜ່ານກົດໝາຍກ່ຽວກັບ FPIC ເຊັ່ນ: ປະເທດຟິລິບປິນໃນປີ 1997 ແລະ ປະເທດເປຣູ ໃນປີ 2010. ສ່ວນຢູ່ພາກພື້ນອາຊີ-ປາຊີຟິກ, ກໍລະນີຂອງປະເທດຟິລິບປິນ ແມ່ນມີຄວາມສຳຄັນ. ຟິລິບປິນໄດ້ປະກາດໃຊ້ກົດໝາຍວ່າດ້ວຍສິດທິຂອງປະຊາຊົນພື້ນເມືອງ (IPRA)[29] ໃນປີ 1997. ກົດໝາຍນີ້ຮັບຮູ້ສິດ




ຂອງປະຊາຊົນພື້ນເມືອງໃນການກຳນົດໂຊກຊາຕາກຳຂອງຕົນດ້ວຍຕົນເອງ ແລະ ສະໜອງກົນໄກເພື່ອປົກປ້ອງດິນແດນຂອງບັນພະບຸລຸດຂອງເຜົ່າພື້ນເມືອງ ແລະ ຊັບພະຍາກອນທັງໝົດທີ່ຢູ່ໃນນັ້ນ. ກົດໝາຍວ່າດ້ວຍສິດທິຂອງປະຊາຊົນພື້ນເມືອງ (IPRA) ໄດ້ໝູນໃຊ້ແນວຄວາມຄິດ FPIC ເປັນເຄື່ອງມື ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງປະຊາຊົນພື້ນເມືອງ ເຮັດໃຫ້ເຂົາເຈົ້າສາມາດອອກສຽງຕໍ່ກັບບັນຫາທີ່ກະທົບເຂົາເຈົ້າ. ກົດໝາຍດັ່ງກ່າວ ຍັງຮຽກຮ້ອງໃຫ້ຕ້ອງປະຕິບັດຫຼັກການ FPIC ກ່ອນຈະຂຸດຄົ້ນຊັບພະຍາກອນໃນຂອບເຂດປົກຄອງ ແລະ ທີ່ດິນຂອງປະຊາຊົນພື້ນເມືອງ. ນອກນັ້ນ, ຍັງມີຫຼາຍກອບແຜນງານລະດັບຊາດ ແລະ ໂຄງສ້າງຕ່າງໆໃນລະດັບພູມີພາກ ຊຶ່ງສະທ້ອນໃຫ້ເຫັນຄວາມໝາຍຄວາມສຳຄັນ ແລະ ຫຼັກການຂອງ FPIC ໃນຫຼາຍປະເທດ ຕົວຢ່າງ: 'ການປະຕິຮູບອອກໃບຕາດິນທີ່ດິນຊຸມຊົນ' ທີ່ປະເທດໄທ, 'ກົດໝາຍວ່າດ້ວຍເຂດປ້ອງກັນ' ທີ່ກຳປູເຈຍ[30], 'ກົດໝາຍວ່າດ້ວຍການປົກຄອງຕົນເອງຂອງທ້ອງຖິ່ນ' ທີ່ເນປານ[31], 'ການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ'[32] ທີ່ປະເທດໄທ ເຊັ່ນກັນ. ກໍລະນີບໍ່ຮູ້ແນ່ນອນວ່າ ດິນແມ່ນດິນລັດ ຫຼື ດິນທີ່ນຳໃຊ້ຕາມປະເພນີ ຄວນປະຕິບັດຫຼັກການ FPIC. ການຕັດສິນຂອງສານລັດຖະທຳມະນູນ ຫວ່າງບໍ່ດົນມານີ້ ແມ່ນຕົວຢ່າງໜຶ່ງຂອງບັນຫານີ້ຄື: ເຮັດໃຫ້ສິດຂອງປະຊາຊົນພື້ນເມືອງຄືນສູ່ສະພາບເດີມໃນການນຳໃຊ້ທີ່ດິນ ແລະ ປ່າໄມ້ ຕາມປະເພນີຂອງເຂົາເຈົ້າ. ການຕັດສິນຂອງສານ ໄດ້ຮັບຮູ້ສິດໃນການກຳນົດໂຊກຊາຕາກຳຂອງຕົນດ້ວຍຕົນເອງຂອງປະຊາຊົນພື້ນເມືອງ (ເບິ່ງກ່ອງ 8).

---

29. Republic of the Philippines 1997, *The Indigenous Peoples' Rights Act of 1997, Republic Act (No. 8371).* Available from: <http://www.gov.ph/1997/10/29/republic-act-no-8371/>. [7 January 2014].
30. Council for Development of Cambodia n.d., *Law on Nature Protection Areas (Protected Area Law, No. 080104).* Available from: <http:// www.cambodiainvestment.gov.kh/law-on-nature-protection-area-protected-areas-law_080104_080104.html>. [7 January 2014].
31. Nepal Law Commission 1999, *Local Self Governance Law 2055.* Available from: <http://www.lawcommission.gov.np/en/prevailing-laws/Prevailing-Laws/Statutes---Acts/English/Local-Self-governance-Act-2055-(1999)/>. [7 January 2014].
32. Edwards, K, Triraganon, R, Silori, C, & Stephenson, J 2012, *Putting Free, Prior, and Informed Consent into Practice in REDD+ Initiatives: A Training Manual*, RECOFTC, IGES and Norad, Bangkok, Thailand.

## ກ່ອງ 8: ສານລັດຖະທຳມະນູນຄືນສິດໃນການນຳໃຊ້ທີ່ດິນ ແລະ ປ່າໄມ້ຕາມປະເພນີໃຫ້ປະຊາຊົນພື້ນເມືອງ ຢູ່ ອິນໂດເນເຊຍ

ສານລັດຖະທຳມະນູນອິນໂດເນເຊຍ ໄດ້ຕັດສິນດ້ວຍຄຳພິພາກສາທີ່ເປັນປະຫວັດສາດ ໃນເດືອນພຶດສະພາ 2013 ໃຫ້ແກ່ປະຊາຊົນພື້ນເມືອງຂອງອິນໂດເນເຊຍ ໃນການນຳໃຊ້ທີ່ດິນ ແລະ ປ່າໄມ້ຕາມປະເພນີຂອງເຂົາເຈົ້າ ໂດຍເນື້ອໃນຂອງຄຳພິພາກສາຂອງສານເວົ້າວ່າ ການນຳໃຊ້ປ່າໄມ້ຕາມປະເພນີຂອງປະຊາຊົນພື້ນເມືອງ ແມ່ນຈັດຢູ່ໃນ ‘ເນື້ອທີ່ປ່າໄມ້ທີ່ເປັນຂອງລັດ’ ເປັນການປູທາງໃຫ້ສິດຂອງປະຊາຊົນພື້ນເມືອງພາຍໃນປະເທດໄດ້ຖືກຮັບຮູ້ຢ່າງກວ້າງຂວາງຂຶ້ນຕື່ມ.

ປະຕິບັດຕາມມາດຕາ 25 ຂອງຖະແຫຼງການວ່າດ້ວຍສິດທິຂອງປະຊາຊົນພື້ນເມືອງແຫ່ງສະຫະປະຊາຊາດ (UNDRIP) ກ່ຽວກັບສິດນຳໃຊ້ທີ່ດິນ ຄຳຕັດສິນຂອງສານຮັບຮູ້ “ສິດໃນການກຳນົດໂຊກຊາຕາກຳຂອງຕົນດ້ວຍຕົນເອງ, ສິດກ່ຽວກັບທີ່ດິນ, ຂອບເຂດເນື້ອທີ່ ແລະ ຊັບພະຍາກອນທຳມະຊາດ, ສິດກ່ຽວກັບເອກະລັກທາງວັດທະນະທຳ ແລະ ຊັບສິນທາງປັນຍາ, ສິດກ່ຽວກັບຄວາມເຫັນດີເຫັນພ້ອມຢ່າງເປັນອິດສະຫຼະ ໂດຍໄດ້ຮັບຮູ້ລ່ວງໜ້າ ແລະ ສິດໃນການກຳນົດຮູບຮ່າງ ແລະ ປະເພດຂອງການກໍ່ສ້າງທີ່ເໝາະສົມສຳລັບເຂົາເຈົ້າ.

ການຕັດສິນຂອງສານ ແມ່ນຕອບສະໜອງຕາມຄຳຮຽກຮ້ອງຕໍ່ສານ ກ່ຽວກັບວິທີທາງປະຕິບັດຂອງກົດໝາຍປ່າໄມ້ 1999 ຕໍ່ປະຊາຊົນພື້ນເມືອງໃນການນຳໃຊ້ປ່າໄມ້ຕາມປະເພນີ ໂດຍໃຫ້ສິດນຳໃຊ້ທີ່ອ່ອນແອໃນເນື້ອທີ່ປ່າໄມ້ທີ່ເປັນຂອງລັດ. ການຕັດສິນຂອງສານປະຈຸບັນໄດ້ເປີດຊ່ອງທາງໃນການຄືນເນື້ອທີ່ປ່າໄມ້ຢ່າງຫຼວງຫຼາຍໃຫ້ປະຊາຊົນພື້ນເມືອງ ຊຶ່ງເຂົາເຈົ້າເປັນຜູ້ຄອບຄອງ ແລະ ດູແລຮັກສາມາເປັນເວລາດົນນານ. ຂໍ້ມູນສະຖິຕິຂອງລັດຖະບານໄດ້ເປີຍເຜີຍໃຫ້ຮູ້ວ່າໃນປີຜ່ານມາ ມີທີ່ດິນຂອງ 32,000 ບ້ານແມ່ນກວມຢູ່ໃນ ’ເນື້ອທີ່ປ່າໄມ້ທີ່ເປັນຂອງລັດ’.

ແຫຼ່ງຂໍ້ມູນ: Decision Number 35/PUU-X/2012 for the sake of justice under the one almighty God 2013. *The Constitutional Court of the Republic of Indonesia*. Available from: <http://www.aman.or.id/wp-content/plugins/downloads-manager/upload/Constitutional_Court_Ruling_16_May_2013.pdf> [February 12, 2014].



# ຄຳຖາມທີ 9:

## ສິ່ງທ້າທາຍຕົ້ນຕໍໃນການນຳໃຊ້ FPIC ໃນພາກປະຕິບັດຕົວຈິງໃນ ເຣດ+ ມີຫຍັງແດ່ ຫຼື ສາມາດເກີດຂຶ້ນ ແລະ ອົງກອນໃດຈະເປັນຜູ້ຮັບປະກັນໃຫ້ FPIC ຖືກປະຕິບັດໃນວຽກງານ ເຣດ+ ໃນລະດັບຊາດ?

FPIC ຄວນຈັດຕັ້ງປະຕິບັດໂດຍພາກສ່ວນຜູ້ພັດທະນາໂຄງການ ແລະ ປະເມີນໂດຍບຸກຄົນທີສາມທີ່ເປັນອິດສະຫຼະ. ເຖິງຢ່າງໃດກໍດີ, ຍັງບໍ່ມີການຮັບປະກັນວ່າ ຈະຕ້ອງປະຕິບັດຕາມ FPIC ເພື່ອເປັນແບບຢ່າງໃນທຸກໆກໍລະນີ ດັ່ງທີ່ສະທ້ອນໃຫ້ເຫັນບາງຫຼັກຖານໃນໄລຍະຜ່ານມາ ຄື: ປະຊາຊົນທ້ອງຖິ່ນບໍ່ມີຄວາມເພິ່ງພໍໃຈສະເໜີໄປຕໍ່ຮູບແບບການກວດສອບ FPIC ຈາກອົງກອນອິດສະຫຼະ. ຕົວຢ່າງ: ຢູ່ ອິນໂດເນເຊຍ ໄດ້ຍົກໃຫ້ເຫັນອົງກອນກວດສອບອິດສະຫຼະ ທີ່ດຳເນີນການກວດສອບບໍ່ເໝາະສົມປານໃດໃນການປະຕິບັດຫຼັກການ FPIC[33]. ເຊັ່ນດຽວກັນ, ຢູ່ ຟີລິບປິນ ມີຫຼາຍຕົວຢ່າງໃຫ້ເຫັນກ່ຽວກັບຈຸດອ່ອນໃນການຈັດຕັ້ງປະຕິບັດຫຼັກການ FPIC ອັນເນື່ອງມາຈາກການຜັນຂະຫຍາຍ ແລະ ການໝູນໃຊ້ຂະບວນການ FPIC (ເບິ່ງກ່ອງ 9).

ປະຈຸບັນກຳລັງຮອບຮວມເອົາປະສົບການເພື່ອມາແລກປ່ຽນ ແລະ ກັ່ນຕອງບົດຮຽນທີ່ຖອດຖອນໄດ້ ແນໃສ່ເພື່ອປັບປຸງຂະບວນການດັ່ງກ່າວໃຫ້ດີຂຶ້ນ. ເຖິງຢ່າງໃດກໍດີ, ສິ່ງສຳຄັນແມ່ນຕ້ອງພິຈາລະນາວ່າ ທຸກໆສະຖານະການແມ່ນແຕກຕ່າງກັນ, ສະນັ້ນ FPIC ຕ້ອງດັດປັບໃຫ້ເຂົ້າກັບສະພາບທຸກໆຄັ້ງ ດັ່ງບົດຮຽນຈາກແຜນງານ UN-REDD ຢູ່ ຫວຽດນາມ (ເບິ່ງກ່ອງ 10). ສະນັ້ນ, ການນຳເອົາ FPIC ມາໃຊ້ໃຫ້ເຂົ້າກັບສະພາບຄວາມເປັນຈິງ ຄວນສຶກສາລະອຽດກ່ຽວກັບວິທີ, ເວລາ, ສະຖານທີ່ ແລະ ພາກສ່ວນໃດເປັນປັດໄຈສຳຄັນ ດັ່ງທີ່ໄດ້ກ່າວໃນບັນດາຄຳຖາມກ່ອນໜ້າ.

ດັ່ງທີ່ເຫັນໄດ້ຢູ່ໃນຕົວຢ່າງທີ່ໃຫ້ໄວ້ໃນກ່ອງ 9 ແລະ 10 ຍັງມີສິ່ງທ້າທາຍຫຼາຍຢ່າງໃນເວລາຈັດຕັ້ງປະຕິບັດຫຼັກການ FPIC ໃນພາກປະຕິບັດຕົວຈິງກ່ຽວກັບ ເຣດ+ ຢູ່ ຂັ້ນພື້ນຖານ. ສິ່ງທ້າທາຍທີ່ສຳຄັນທີ່ສຸດຄື:

- ຊຸມຊົນທ້ອງຖິ່ນຕ້ອງມີເວລາພຽງພໍເພື່ອເຂົ້າຮ່ວມຂະບວນການ FPIC ເພື່ອໃຫ້ເຂົາເຈົ້າໄດ້ຮັບການຊົດເຊີຍຢ່າງເໝາະສົມ.
- ເປັນການດີ ຖ້າໃຫ້ສະມາຊິກຜູ້ເຖົ້າເປັນຜູ້ຕາງໜ້າຊຸມຊົນເຂົ້າຮ່ວມ ໃນຂະບວນການການຕັດສິນໃຈ ແລະ ການເຫັນດີເຫັນພ້ອມ. ວິທີນີ້ຈະຮັບປະກັນຄວາມຕໍ່ເນື່ອງ ແລະ ຜູ້ເຂົ້າຮ່ວມຈະໄດ້ຮັບຊາບຂໍ້ມູນຂ່າວສານຢ່າງຮອບດ້ານທີ່ກ່ຽວຂ້ອງກັບໂຄງການ ແລະ FPIC.
- ທຸກຝ່າຍຕ້ອງຮັກສາກຳນົດເວລາທີ່ໄດ້ຕົກລົງເປັນເອກະພາບກັນ.
- ເນື່ອງຈາກວ່າຂະບວນການ FPIC ສາມາດສະຫຼັບຊັບຊ້ອນ ຈຶ່ງຈຳເປັນຕ້ອງມີຂໍ້ຕົກລົງຜູກມັດ ແລະ ກ່ຽວພັນກັບຂັ້ນພື້ນຖານ, ຂົງເຂດ ແລະ ໃນລະດັບຊາດ.
- ກຳມະສິດທີ່ດິນຖືກຕ້ອງຕາມກົດໝາຍ ແລະ ຕາມປະເພນີຕ້ອງໄດ້ຮັບການພິຈາລະນາ ແລະ ເຄົາລົບໃນຫຼັກການ FPIC ຊຶ່ງຕ້ອງໃຊ້ເວລາຫຼາຍສົມຄວນ.

---

33. Edwards, K, Triraganon, R, Silori, C, & Stephenson, J 2012, *Putting Free, Prior, and Informed Consent into Practice in REDD+ Initiatives: A Training Manual*, RECOFTC, IGES and Norad, Bangkok, Thailand.

- ຕ້ອງເພີ່ມທະວີຂີດຄວາມສາມາດຂອງຜູ້ທີ່ມີສ່ວນຮ່ວມ ເພື່ອໃຫ້ເຂົ້າເຈົ້າເຂົ້າຮ່ວມຂະບວນການ FPIC ຢ່າງຈິງຈັງ ເນື່ອງຈາກວ່າໂຄງການທີ່ສະເໜີມາອາດເປັນອັນໃໝ່ສຳລັບຊຸມຊົນທ້ອງຖິ່ນ ແລະ ປະຊາຊົນພື້ນເມືອງ.
- ໃຫ້ເວລາພຽງພໍ ໂດຍສະເພາະເພື່ອຮວບຮວມຂໍ້ມູນຂ່າວສານໃຫ້ຄົບຖ້ວນ ແລະ ໃຫ້ມີຕາງໜ້າກຸ່ມຄົນຕ່າງໆ ໃນຊຸມຊົນລວມທັງກຸ່ມຊົນເຜົ່າ ແລະ ປະຊາຊົນພື້ນເມືອງເຂົ້າຮ່ວມ ເພື່ອເຮັດໃຫ້ມີຄວາມເຊື່ອຖືລະຫວ່າງທຸກຝ່າຍທີ່ມີສ່ວນຮ່ວມໃນຂະບວນການ.
- ການທີ່ຈະສະເໜີຂໍ້ມູນຂ່າວສານທັງໝົດກ່ຽວກັບໂຄງການເປັນພາສາທ້ອງຖິ່ນຕາມຮູບແບບ ແລະ ວິທີທາງວັດທະນະທຳ ເພື່ອໃຫ້ກຸ່ມຊົນເຜົ່າ ແລະ ປະຊາຊົນພື້ນເມືອງເຂົ້າໃຈນັ້ນ ເປັນສິ່ງທ້າທາຍ ສະນັ້ນ, ໂຄງການ ແລະ ທ້ອງຖິ່ນ ຄວນຈ້າງຜູ້ອຳນວຍຄວາມສະດວກ ຫຼື ຄູຝຶກຢູ່ກັບທ້ອງຖິ່ນເລີຍ. ກ່ອນລົງໄປຫາຊຸມຊົນ ແລະ ປະຊາຊົນພື້ນເມືອງໃນຄັ້ງທຳອິດ ເຂົາເຈົ້າຕ້ອງໄດ້ຮັບຊາບຂໍ້ມູນຂ່າວສານກ່ຽວກັບຄວາມຄິດລິເລີ່ມ ຫຼື ໂຄງການ ແລະ ຍົກລະດັບຂີດຄວາມສາມາດເພື່ອເຜີຍແຜ່ຂໍ້ມູນຂ່າວສານໃຫ້ປະຊາຊົນໃນຊຸມຊົນຮັບຊາບ ແລະ ເຂົ້າໃຈດີທີ່ສຸດ.
- ກໍລະນີບໍ່ມີໃຜສາມາດສື່ສານເປັນພາສາທ້ອງຖິ່ນໄດ້ ຄວນແຕ່ງຕັ້ງຜູ້ໃດຜູ້ໜຶ່ງທີ່ເໝາະສົມເພື່ອເປັນລ່າມແປພາສາ.
- ຕ້ອງມີກົນໄກການຮ້ອງທຸກ ເພື່ອຮັບເອົາຄຳຮ້ອງທຸກ ແລະ ຫຼີກລ່ຽງຂໍ້ຂັດແຍ່ງທີ່ຈະເກີດເປັນ "ບັນຫາໃຫຍ່".
- ຂໍ້ມູນຂ່າວສານທີ່ສະໜອງໃຫ້ຊຸມຊົນ ຕ້ອງເປັນຂໍ້ມູນທີ່ຊັດເຈນ, ຄົບຖ້ວນ ແລະ ສາມາດກວດສອບໄດ້.
- ຮັບປະກັນຂັ້ນຕອນການພິສູດຢັ້ງຢືນທັງໝົດຕ້ອງເປັນກາງ.
- ກ່ຽວກັບ ເຣດ+, ຍັງບໍ່ເປັນເອກະພາບກ່ຽວກັບການນຳໃຊ້ຄຳສັບ 'ການເຫັນດີເຫັນພ້ອມ' ລະຫວ່າງຜູ້ໃຫ້ທຶນຊ່ວຍເຫຼືອ ແລະ ຜູ້ສະໜັບສະໜູນ ເຣດ+ ເຮັດໃຫ້ການຈັດຕັ້ງປະຕິບັດ FPIC ຢູ່ ຂັ້ນພື້ນຖານມີຄວາມທ້າທາຍ ແລະ ຫຍຸ້ງຍາກຂຶ້ນຕື່ມ.
- ເພື່ອຫຼີກລ່ຽງການສວຍໃຊ້ຈາກຜູ້ຈັດຕັ້ງປະຕິບັດໂຄງການ, FPIC ຕ້ອງຖືກດຳເນີນແບບໂປ່ງໃສ ແລະ ມີຄວາມເຊື່ອຖື ປາດສະຈາກພຶດຕິກຳທີ່ມີລັກສະນະບັງຄັບເພື່ອໃຫ້ຕົກລົງເຫັນດີ ເຊັ່ນ: ບັງຄັບ, ຊື້ຈ້າງ, ຂົ່ມຂູ່ ຫຼື ໃຊ້ຮູບແບບທາງການເມືອງ ແລະ ສັງຄົມເພື່ອກົດດັນ.



### ກ່ອງ 9: ຕົວຢ່າງສິ່ງທ້າທາຍທີ່ພົວພັນກັບການຈັດຕັ້ງປະຕິບັດ FPIC

ຢູ່ ຟີລິບປິນ, ຈຸດອ່ອນໃນຂະບວນການ FPIC ຂອງບໍລິສັດຂຸດຄົ້ນບໍ່ແຮ່ມີສ່ວນພົວພັນເຖິງລະບົບທີ່ບໍ່ດີພໍ ແລະ ຄວາມຫລົ້ມເຫລວໃນການຈັດຕັ້ງປະຕິບັດ. ຕົວຢ່າງ: ຈຸດອ່ອນຂອງລະບົບລວມມີ:

- ກ່ອນປີ 2012, ການດຳເນີນຂະບວນການ FPIC ເຮັດແຕ່ເທື່ອດຽວເວລາເລີ່ມໂຄງການເທົ່ານັ້ນ.
- ຂາດຫຼັກການເພື່ອໂຕ້ແຍ້ງ ຫຼັກການຕົກລົງເຫັນດີ ຫຼື ໂຈະໂຄງການທີ່ບໍ່ປະຕິບັດຕາມກົດລະບຽບ ເພື່ອຮັບປະກັນໃຫ້ FPIC ໄດ້ຮັບການຈັດຕັ້ງປະຕິບັດ
- ຕ້ອງໃຫ້ປະຊາຊົນພື້ນເມືອງເຫັນດີເຫັນພ້ອມນຳເທົ່ານັ້ນ ເຖິງວ່າໂຄງການສົ່ງຜົນກະທົບຕໍ່ກຸ່ມຄົນທີ່ບໍ່ແມ່ນຊົນເຜົ່າພື້ນເມືອງ.
- ຂາດກົນໄກການຕິດຕາມກວດກາ ເພື່ອກຳນົດກໍລະນີມີການລະເມີດເກີດຂຶ້ນ ໃນລະຫວ່າງການດຳເນີນຂະບວນການ FPIC ແລະ ການຈັດຕັ້ງປະຕິບັດ ບົດບັນທຶກຂໍ້ຕົກລົງ (MoA) ລະຫວ່າງ ບໍລິສັດຂຸດຄົ້ນບໍ່ແຮ່ ແລະ ປະຊາຊົນພື້ນເມືອງ.
- ການເຊັນບົດບັນທຶກຂໍ້ຕົກລົງນອກພື້ນທີ່ຂອງຊຸມຊົນສາມາດມີສ່ວນເຮັດໃຫ້ຊຸມຊົນຂາດຄວາມເຊື່ອໝັ້ນຕໍ່ຜູ້ນຳຂອງເຂົາເຈົ້າ/ຜູ້ທີ່ຖືກມອບໝາຍໃຫ້ມີສິດລົງນາມໃນຂໍ້ຕົກລົງ.

ບັນຫາຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດໄດ້ສົ່ງຜົນກະທົບຕໍ່ຂະບວນການ FPIC ເຊັ່ນດຽວກັນ ລວມທັງຕົວຢ່າງລຸ່ມນີ້:

- ການເພີກເສີຍຂອງບໍລິສັດໃນການປຶກສາຫາລືກັບຊຸມຊົນຢູ່ພື້ນທີ່ຂອງໂຄງການ;
- ການບໍ່ເຄົາລົບຕໍ່ຂະບວນການຕາມປະເພນີຂອງປະຊາຊົນພື້ນເມືອງ ເພື່ອໄປເຖິງຂັ້ນຕັດສິນໃຈ ແລະ ວາງຫລັກການ FPIC ຫຼື ການປະກາດນະໂຍບາຍຂອງເຂົາເຈົ້າ;
- ບິດເບືອນສະພາບຄວາມເປັນຈິງຂອງທ້ອງຖິ່ນໂດຍຜ່ານສື່ ແລະ ການຄວບຄຸມການໄຫຼວຽນຂອງຂໍ້ມູນຂ່າວສານ;
- ໃຫ້ສິນບົນໂດຍໃຊ້ຮູບແບບຂອງຂັວນ ແລະ ການຂູ່ເຂັນ;
- ການເພີກເສີຍຂອງໜ່ວຍງານລັດໃນການເຂົ້າຮ່ວມແຊກແຊງ ເພື່ອຮັບປະກັນໃຫ້ປະຕິບັດຕາມຂະບວນການ FPIC ກ່ອນການເລີ່ມໂຄງການ;
- ຂໍ້ມູນຂ່າວສານຝ່າຍຜູ້ຈັດຕັ້ງປະຕິບັດໂຄງການເປັນຜູ້ສະໜອງໃຫ້ຝ່າຍດຽວ ແລະ ໜ່ວຍງານລັດໃຫ້ຄຳແນະນຳຂໍ້ມູນຂ່າວສານບໍ່ພຽງພໍ ແລະ ການໂຄສະນາເຜີຍແຜ່ໃຫ້ມະຫາຊົນມີຂໍ້ຈຳກັດ;
- ຂາດຂໍ້ມູນຂ່າວສານ, ການສຶກສາ ແລະ ການຕິດຕໍ່ສື່ສານກ່ຽວກັບຂະບວນການ FPIC, ກົນໄກຮອງຮັບການຮ້ອງທຸກ ແລະ ໂຄງການເອງ ເພື່ອແຈ້ງກ່ຽວກັບຂະບວນການຕັດສິນໃຈ.



### ກ່ອງ 10: ບົດຮຽນ FPIC ຈາກ Vietnam, ປີ 2010

ແຜນງານ UN-REDD ຢູ່ ຫວຽດນາມ ເປັນຜູ້ທຳອິດຈັດຕັ້ງປະຕິບັດ FPIC ຢູ່ 2 ເມືອງຂອງແຂວງ ເລີມດົງ (Lam Dong) ປີ 2010. ຂະບວນການຊຶ່ງປະກອບດ້ວຍ 8 ຂັ້ນຕອນຖືກພັດທະນາຂຶ້ນດັ່ງນີ້: 1) ການກະກຽມເຊັ່ນ: ພັດທະນາເຄື່ອງມືອຸປະກອນເພື່ອຕິດຕໍ່ສື່ສານ, 2) ການປຶກສາຫາລືກັບພະນັກງານທ້ອງຖິ່ນ, 3) ການຈ້າງຜູ້ອຳນວຍຄວາມສະດວກ (ຄູຝຶກ) ປະຈຳຢູ່ທ້ອງຖິ່ນ, 4) ການຝຶກອົບຮົມໃຫ້ຜູ້ອຳນວຍຄວາມສະດວກທ້ອງຖິ່ນ 5) ການປູກຈິດສຳນຶກໃຫ້ທ້ອງຖິ່ນ, 6) ການເຂົ້າຮ່ວມກອງປະຊຸມລວມບ້ານ, 7) ການບັນທຶກຂໍ້ຕົກລົງ, 8) ຜູ້ອຳນວຍຄວາມສະດວກລາຍງານໃຫ້ແຜນງານ UN-REDD ຢູ່ຫວຽດນາມ, 9) ການພິສູດຢັ້ງຢືນ ແລະ ປະເມີນຜົນ.

ໃນເວລາດຳເນີນການພິສູດຢັ້ງຢືນ ໄດ້ລາຍງານກ່ຽວກັບ 3 ຂໍ້ສັງເກດໃຫຍ່ດັ່ງນີ້:

a) ຈຳເປັນໃນການຕິດຕໍ່ສື່ສານຕື່ມກ່ຽວກັບຄວາມສ່ຽງ ແລະ ຄ່າໃຊ້ຈ່າຍຂອງໂຄງການ ເຣດ+ ທີ່ສະເໜີມາ.
b) ບໍ່ມີເວລາພຽງພໍ ເພື່ອໃຫ້ບ້ານປຶກສາຫາລືກັນພາຍໃນ ເນື່ອງຈາກວ່າກອງປະຊຸມບ້ານດຳເນີນພຽງແຕ່ 2 ຊົ່ວໂມງເທົ່ານັ້ນ ເຮັດໃຫ້ບໍ່ສາມາດລົງເລິກໃນເນື້ອຫາສາລະຂອງການສົນທະນາ.
c) ບໍ່ມີກົນໄກທີ່ເປັນກາງສຳລັບຮ້ອງທຸກ ແລະ ທົບທວນໃຫ້ປະຊາຊົນທ້ອງຖິ່ນ.

ຈາກສິ່ງທີ່ພົບເຫັນນີ້, ຈຶ່ງໄດ້ທົບທວນຂະບວນການ FPIC ແລະ ປັບປຸງ ເພື່ອນຳໄປຈັດຕັ້ງປະຕິບັດຢູ່ບັນດາແຂວງອື່ນ ຢູ່ ຫວຽດນາມ ແລະ ປະເທດອື່ນໆ.

ແຫຼ່ງຂໍ້ມູນ: UN-REDD Programme 2010, *Applying Free Prior and Informed Consent in Vietnam*. Available from: <www.unredd.net/index.php?option=com_docman&task= cat_view&gid=849&Itemid=53 >. [12 November 2013].; 2) RECOFTC 2010, *Evaluation and Verification of the Free, Prior and Informed Consent Process under the UN-REDD Programme in Lam Dong Province, Vietnam*. Available from: <www.unredd.net/index.php?option=com_docman&task= cat_view&gid=849&Itemid=53 >. [12 November 2013].

ອົງກອນແຫ່ງຊາດທີ່ມີໜ້າທີ່ອອກກົດໝາຍ ຫຼື ລະບຽບຄຸ້ມຄອງ FPIC ກໍຕ້ອງໄດ້ຮັບຜິດຊອບຊຸກຍູ້ໃຫ້ປະຕິບັດຕາມ FPIC ຄືກັນ ອົງກອນດັ່ງກ່າວຄວນເປັນຜູ້ລິເລີ່ມໃນການຕິດຕາມກວດກາ, ແຕ່ດີທີ່ສຸດຄວນແມ່ນອົງການກວດສອບທີ່ເປັນອິດສະຫຼະ. ໃນກໍລະນີຂອງ ເຣດ+, ອົງກອນແຫ່ງຊາດທີ່ຮັບຜິດຊອບ ເຣດ+ ມີໜ້າທີ່ຮັບຜິດຊອບກວດກາການຈັດຕັ້ງປະຕິບັດ FPIC ເຊັ່ນກັນ.

ນອກນັ້ນ, ອົງການຈັດຕັ້ງທີ່ບໍ່ສັງກັດລັດໃນລະດັບຊາດທີ່ເຮັດວຽກງານດັ່ງກ່າວ ຫຼື ຄະນະກຳມະການແຫ່ງຊາດກ່ຽວກັບຊົນເຜົ່າພື້ນເມືອງ (NCIP) (ຕົວຢ່າງ: ຢູ່ ຟີລິບປິນ) ສາມາດດຳເນີນການກວດສອບທີ່ເປັນກາງໄດ້. ຜູ້ກວດສອບ ຫຼື ກຸ່ມຄົນທີ່ກວດສອບຕ້ອງແມ່ນຜູ້ທີ່ບໍ່ມີສ່ວນຮ່ວມໃນຂະບວນການ FPIC. ປະຈຸບັນ, ມີ 2 ອົງການຈັດຕັ້ງທີ່ມີປະສົບການໃນການກວດສອບ ແລະ ຢັ້ງຢືນໂຄງການ ເຣດ+ ເປັນຕົ້ນແມ່ນ “ມາດຖານກາກບອນຜ່ານການພິສູດຢັ້ງຢືນແລ້ວ” (VCS) ແລະ ພັນທະມິດທາງດ້ານສະພາບດິນຟ້າອາກາດ, ຊຸມຊົນ ແລະ ຊີວະນາໆພັນ” (CCBA).

ເຖິງຢ່າງໃດກໍດີ, ຍັງບໍ່ມີບົດລົງໂທດຕາມກົດໝາຍເທື່ອ ໃນກໍລະນີການຈັດຕັ້ງປະຕິບັດ FPIC ບໍ່ຄົບທຸກຂັ້ນຕອນ ຫຼື ບໍ່ເປັນກາງ ຫຼື ວິທີໃດໜຶ່ງທີ່ບໍ່ເປັນໄປຕາມບົດແນະນຳ[34]. FPIC ກໍກຳລັງຫຼຸດຜ່ອນຄວາມສ່ຽງສຳລັບໂຄງການທີ່ສະເໜີມາ ເພື່ອໃຫ້ຈັດຕັ້ງປະຕິບັດ. ດັ່ງທີ່ກ່າວໄວ້ກ່ອນໜ້າ ການດຳເນີນຂະບວນການ FPIC ທີ່ຄົບຖ້ວນ ແລະ ຍຸດຕິທຳຈະເປັນຜົນດີໃຫ້ທັງຝ່າຍຜູ້ຈັດຕັ້ງປະຕິບັດໂຄງການ ແລະ ຊຸມຊົນທ້ອງຖິ່ນ, ລວມທັງປະຊາຊົນພື້ນເມືອງອີກດ້ວຍ.

---

34. Motoc, A & theTebtebba Foundation 2005, *Legal Commentary on the Concept of Free, Prior and Informed Consent*, Legal Working Paper Submitted to 21st Session of Commission on Human Rights. Available from: <www2.ohchr.org/english/issues/indigenous/docs/wgip23/WP1.doc >. [5 January 2014].



# ຄຳຖາມທີ 10:

## ບົດບາດຂອງປະຊາຊົນທ້ອງຖິ່ນໃນການຈັດຕັ້ງປະຕິບັດ FPIC ໃນຂົງເຂດວຽກງານ ເຣດ+ ມີຫຍັງແດ່?

ປະຊາຊົນທ້ອງຖິ່ນມີສິດໃຫ້ ຫຼື ຢັບຢັ້ງຄວາມເຫັນດີເຫັນພ້ອມຂອງພວກເຂົາຍາມໃດກໍໄດ້. ໂດຍຫຼັກການແລ້ວ ພວກເຂົາເປັນຜູ້ຕັດສິນໃຈຂັ້ນສຸດທ້າຍ. ເພື່ອບັນລຸການຕັດສິນໃຈຢັບຢັ້ງ ຫຼື ເຫັນດີເຫັນພ້ອມ ຈຸດຕ່າງໆດັ່ງລຸ່ມນີ້ຈຳຕ້ອງໄດ້ຮັບການພິຈາລະນາ:

- ປະຊາຊົນທ້ອງຖິ່ນຕ້ອງຈັດຕັ້ງກັນເອງ ແລະ ຕົກລົງເປັນເອກະພາບກ່ຽວກັບຂະບວນການ ເພື່ອເຫັນດີເຫັນພ້ອມ, ສະຖາບັນທີ່ເປັນຕົວແທນ ແລະ ຜູ້ຕາງໜ້າເຂົາເຈົ້າ.
- ປະຊາຊົນທ້ອງຖິ່ນມີສິດຮຽກຮ້ອງຄ່າຊົດເຊີຍ ຕໍ່ກັບເວລາທີ່ເສຍໄປໃນການເຂົ້າຮ່ວມກອງປະຊຸມທີ່ກ່ຽວຂ້ອງກັບ FPIC.
- ປະຊາຊົນທ້ອງຖິ່ນຕ້ອງຈັດຕັ້ງກັນເອງ ແລະ ຕົກລົງເປັນເອກະພາບກ່ຽວກັບຂະບວນການ ເພື່ອເຫັນດີເຫັນພ້ອມ, ສະຖາບັນທີ່ເປັນຕົວແທນ ແລະ ຜູ້ຕາງໜ້າເຂົາເຈົ້າ.
- ຂັ້ນຕອນການຕົກລົງຈະດຳເນີນໄປດ້ວຍດີ ຖ້າທຸກຝ່າຍທີ່ມີສ່ວນຮ່ວມຍອມຮັບຟັງ ແລະ ພ້ອມທີ່ຈະຮຽນຮູ້ດ້ວຍຄວາມສະມັກໃຈກ່ຽວກັບທຸກໆທັດສະນະຂອງຄວາມຄິດລິເລີ່ມ ຫຼື ໂຄງການໃໝ່ ແລະ ສະຫຼະເວລາຢ່າງພຽງພໍ ເພື່ອເຂົ້າຮວມປຶກສາຫາລືກ່ຽວກັບໂຄງການທີ່ສະເໜີມາ ຫຼື ມີທາງເລືອກອື່ນໆ.
- ຂັ້ນຕອນດັ່ງກາວ ສາມາດນຳພາໂດຍຜູ້ອຳນວຍຄວາມສະດວກໃນລະດັບຊຸມຊົນ ຊຶ່ງເຂົາເຈົ້າມີຄວາມສາມາດສັງລວມຈຸດສຳຄັນຕົ້ນຕໍຂອງໂຄງການ ເພື່ອອະທິບາຍໃຫ້ຊາວບ້ານສາມາດເຂົ້າໃຈງ່າຍ. ຂັ້ນຕອນນີ້ສາມາດນຳໃຊ້ເຄື່ອງມືທີ່ກະທັດລັດເຊັ່ນ: ຮູບພາບ, ການສະແດງລະຄອນ, ລະຄອນຕຸກກະຕາ, ຮ້ອງເພງ ແລະ ອື່ນໆ ເພື່ອແລກປ່ຽນຂໍ້ມູນກ່ຽວກັບໂຄງການທີ່ສະເໜີມາ.
- ຜູ້ອຳນວຍຄວາມສະດວກໃນລະດັບຊຸມຊົນມີບົດບາດສຳຄັນໃນການຊຸກຍູ້ປຸກລະດົມທຸກພາກສ່ວນທີ່ມີສ່ວນຮ່ວມ, ລວມທັງແມ່ຍິງ ເພື່ອແລກປ່ຽນຄຳຄິດຄຳເຫັນ ເຮັດໃຫ້ສາມາດປະກອບສ່ວນຢ່າງຕັ້ງໜ້າໃນການຈັດຕັ້ງປະຕິບັດ FPIC. ບາງແນວທາງພື້ນຖານທີ່ສາມາດນຳໃຊ້ເພື່ອຊ່ວຍຊາວບ້ານໃນການແລກປ່ຽນຄຳຄິດຄຳເຫັນໃນທາງທີ່ສ້າງສັນອາດ ລວມການສືບຖາມເລິກເຂົ້າໄປໃນບັນຫາ ແລະ ຄວາມເປັນຫ່ວງທີ່ແຕກຕ່າງກັນຂອງຊາວບ້ານໂດຍຈັດເປັນກຸ່ມນ້ອຍ ເພື່ອປຶກສາຫາລືລະຫວ່າງກຸ່ມທີ່ມີຖານະທາງດ້ານເສດຖະກິດ-ສັງຄົມແຕກຕ່າງກັນພາຍໃນບ້ານ ແລະ ຮວບຮວມການສົນທະນາຕ່າງໆ ເພື່ອສະເໜີຄືນໃຫ້ຊຸມຊົນທ້ອງຖິ່ນ.
- ຕ້ອງໃຫ້ຄວາມເຄົາລົບຕໍ່ຄຳຄິດຄຳເຫັນຂອງທຸກພາກສ່ວນທີ່ມີສ່ວນຮ່ວມ, ລວມທັງກຸ່ມຍິງ, ຕ່າງໜ້າກຸ່ມຊົນເຜົ່າສ່ວນນ້ອຍ ແລະ ກຸ່ມທີ່ຖືກກີດກັ້ນໃນສັງຄົມ ບົນຈິດໃຈຂອງການຮຽນຮູ້ຊຶ່ງກັນແລະກັນ.

- ການຊຸກຍູ້ປຸກລະດົມປະຊາຊົນທ້ອງຖິ່ນສ້າງຄວາມໄວ້ເນື້ອເຊື່ອໃຈກັບພາກສ່ວນທີ່ມີສ່ວນຮ່ວມອື່ນ ຊຶ່ງເຂົາເຈົ້າອາດຕ້ອງໄດ້ເຂົ້າຮ່ວມໃນຂັ້ນຕອນໃດໜຶ່ງຂອງໂຄງການ ແລະ ຊຸມຊົນທ້ອງຖິ່ນ ອາດບໍ່ເຄີຍ ແລກປ່ຽນຄໍາຄິດຄໍາເຫັນກ່ຽວກັບໂຄງການກັບເຂົາເຈົ້າເຫຼົ່ານັ້ນມາກ່ອນ.
- ຕ້ອງໃຫ້ມີກົນໄກຮອງຮັບການຮ້ອງທຸກ ແລະ ສະຖາບັນທີ່ເປັນຕົວແທນໃນຂະບວນການຕັດສິນໃຈທີ່ ສາມາດເຄື່ອນໄຫວວຽກງານໄດ້.



RECOFTC

THE CENTER FOR PEOPLE AND FORESTS

ພາລະໜ້າທີ່ຂອງ RECOFTC ແມ່ນເພື່ອຮັບປະກັນສິດທິຂອງປະຊາຊົນທ້ອງຖິ່ນ ໃຫ້ມີຄວາມໝັ້ນຄົງກວ່າເກົ່າ, ການປົກຄອງໄດ້ຮັບການປັບປຸງ ແລະ ປະຊາຊົນທ້ອງຖິ່ນ ໄດ້ຮັບຜົນປະໂຫຍດທີ່ເທົ່າທຽມໃນການດັດແປງພື້ນທີ່ປ່າໄມ້ ໃນເຂດພາກພື້ນອາຊີ ແລະ ປາຊີຟິກ ໃຫ້ມີຄວາມຍືນຍົງ.

RECOFTC ຖືເປັນສະຖານທີ່ແຫ່ງດຽວ ແລະ ມີຄວາມສຳຄັນ ໃນໂລກຂອງປ່າໄມ້, ຊຶ່ງເປັນອົງການຈັດຕັ້ງສາກົນ ທີ່ບໍ່ຫວັງຜົນກຳໄລ ທີ່ເຮັດໜ້າທີ່ສະເພາະໃນການພັດທະນາຄວາມສາມາດ ຂອງປ່າໄມ້ຊຸມຊົນ. RECOFTC ມີສ່ວນພົວພັນກັບເຄືອຂ່າຍທາງຍຸດທະສາດ ແລະ ຄູ່ຮ່ວມງານທີ່ດີກັບລັດຖະບານ, ອົງການຈັດຕັ້ງທີ່ບໍ່ສັງກັດລັດ, ອົງການພັດທະນາທາງສັງຄົມ, ພາກເອກະຊົນ, ປະຊາຊົນທ້ອງຖິ່ນ ແລະ ສະຖາບັນຄົ້ນຄວ້າ ແລະ ການສຶກສາໃນທົ່ວພາກພື້ນອາຊີ-ປາຊີຟິກ ແລະ ອື່ນໆ. ມີປະສົບການຂອງສາກົນ ແລະ ວິທີການເຄື່ອນໄຫວໃນການພັດທະນາຄວາມອາດສາມາດ - ທີ່ກ່ຽວຂ້ອງກັບການຄົ້ນຄວ້າ ແລະ ການວິໄຈ, ສະຖານທີ່ສາທິດ ແລະ ຜົນການ ຝຶກອົບຮົມ ມາກວ່າ 25 ປີ

RECOFTC – The Center for People and Forests
P.O. Box 1111
Kasetsart Post Office
Bangkok 10903, Thailand
Tel (66-2) 940-5700
Fax (66-2) 561-4880
info@recoftc.org
www.recoftc.org

Printed on recycled paper

Norad